ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 94 /ສພຂ.ຊຍ

ໄຊຍະບູລີ,ວັນທີ 30 ທັນວາ 2025

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບຜົນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 5 ປີຄັ້ງທີ VII (2021-2025) ສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2024, ການຈັດຕັ້ງ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2025 ແລະ ທິດທາງແຜນການປີ 2026

- ອີງຕາມ ມາດຕາ 57 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ສະພາປະຊາຊົນແຂວງ ຊຸດທີ IV, ຄັ້ງວັນທີ 29 ທັນວາ 2025.

ກອງປະຊຸມສະພາປະຊາຊົນແຂວງ ໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 5 ປີຄັ້ງທີ VII (2021-2025), ປະຈໍາປີ 2025, ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2024 ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2026, ການປະກອບຄໍາເຫັນຂອງສະມາຊິກສະພາປະຊາຊົນແຂວງ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ສະພາປະຊາຊົນແຂວງ ຊຸດທີ IV.

### ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງໄຊຍະບູລີ 5 ປີ ຄັ້ງທີ VII (2021-2025)**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ແລະ ເຫັນດີ ເປັນເອກະພາບຕໍ່ການລາຍງານຂອງອົງການປົກຄອງແຂວງ ຊຶ່ງໄດ້ຍົກໃຫ້ເຫັນຄວາມພະຍາຍາມຂອງອົງການປົກຄອງແຂວງ ໃນການສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທ້າຍຫຼາຍປະການ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງແຂວງໄຊຍະບູລີ 5 ປີ ຄັ້ງທີ VII (2021-2025). ທີ່ໄດ້ດໍາເນີນໃນທາມກາງທີ່ສະພາບການພາກພື້ນ ແລະ ສາກົນທີ່ມີການຜັນແປຢ່າງສັບສົນ, ມີສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນການແຜ່ລະບາດຂອງພະຍາດໂຄວິດ-19, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງປະເທດເຮົາ ໄດ້ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ. ແຕ່ພາຍໃຕ້ການນໍາພາ-ຊີ້ນໍາຢ່າງໃກ້ຊິດຂອງຄະນະບໍລິຫານງານພັກແຂວງ, ການຕິດຕາມຊຸກຍູ້ຂອງສະພາປະຊາຊົນແຂວງ ແລະ ຄວາມ

ເປັນເຈົ້າການຂອງປະຊາຊົນບັນດາເຜົ່າ, ອົງການປົກຄອງແຂວງ ສາມາດຈັດຕັ້ງປະຕິບັດຄາດໝາຍທີ່ວາງໄວ້ຈຳນວນໜຶ່ງໄດ້ເກີນແຜນ ແລະ ຫຼາຍຄາດໝາຍມີຄວາມຄືບໜ້າ ເຮັດໃຫ້ ແຂວງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ. ເສດຖະກິດມະຫາພາກສືບຕໍ່ເຕີບໂຕຢ່າງຕໍ່ເນື່ອງ ສະເລ່ຍ 4,8%; ລວມຍອດຜະລິດຕະພັນພາຍໃນແຂວງ (GDP) ປະຕິບັດໄດ້ 24.108 ຕື້ກີບ; ສະເລ່ຍຕໍ່ຫົວຄົນ 2.567 ໂດລາ; ການລົງທຶນເພື່ອການພັດທະນາ ບັນລຸໄດ້ 21.264,97 ຕື້ກີບ; ການປະຕິບັດບັດແຜນງົບປະມານແຫ່ງລັດ ລາຍຮັບບັນລຸໄດ້ 9.233 ຕື້ກີບ ເທົ່າກັບ 178% ຂອງແຜນການ; ການຄຸ້ມຄອງລາຍຈ່າຍປະຕິບັດໄດ້ 3.381 ຕື້ກີບ ເທົ່າກັບ 113,72% ຂອງແຜນການ; ມູນຄ່າສິນຄ້າສົ່ງອອກໄປຕ່າງປະເທດ ບັນລຸໄດ້ 487,03 ລ້ານໂດລາ ເທົ່າກັບ 119,73% ຂອງແຜນການ, ຄຸ້ມຄອງການນຳເຂົ້າສິນຄ້າຈາກຕ່າງປະເທດໄດ້ 354,02 ລ້ານໂດລາ ເທົ່າກັບ 115,71% ຂອງແຜນການ ແລະ ການຄຸ້ມຄອງ ບໍລິຫານລັດ-ສັງຄົມດ້ວຍກົດໝາຍ ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

**ມາດຕາ 2 ຮັບຮອງການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປີ 2024**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ດັ່ງນີ້:

1. ລາຍຮັບທັງໝົດ: ສາມາດປະຕິບັດໄດ້ 2.420,11 ຕື້ກີບ ເທົ່າກັບ 115,67% ຂອງແຜນການ, ໃນນັ້ນ:
   - ລາຍຮັບພູດສູນກາງ ປະຕິບັດໄດ້ 1.220,29 ຕື້ກີບ, ເທົ່າກັບ 88,62% ຂອງແຜນການ;
   - ລາຍຮັບພາຍໃນແຂວງ ປະຕິບັດໄດ້ 1.199,81 ຕື້ກີບ, ເທົ່າກັບ 167,74% ຂອງແຜນການ.
2. ລາຍຈ່າຍທັງໝົດ: ປະຕິບັດໄດ້ 710,86 ຕື້ກີບ ເທົ່າກັບ 135,24% ຂອງແຜນການ;
3. ດຸ່ນດ່ຽງງົບປະມານ: ປະຕິບັດໄດ້ 87,98 ຕື້ກີບ ເທົ່າກັບ 46,38% ຂອງແຜນການ.

**ມາດຕາ 3 ຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2025**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບ ຕໍ່ບົດລາຍງານຂອງ ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ສຸ້ມໃສ່ພະຍາຍາມຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງ ປະຈຳປີ 2025 ຢ່າງຕັ້ງໜ້າ, ໃນທ່າມກາງທີ່ສະພາບການພາກພື້ນ ແລະ ສາກົນທີ່ມີການຜັນແປຢ່າງສັບສົນ, ບວກກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງປະເທດເຮົາ, ບັນຫາຄ່າຄອງຊີບ, ໄພພິບັດທຳມະຊາດ, ການລະບາດຂອງພະຍາດລະດູການ ແລະ ສິ່ງທ້າທາຍອື່ນໆ. ແຕ່ພາຍໃຕ້ການນຳພາ-ຊີ້ນຳຢ່າງໃກ້ຊິດຂອງອົງຄະນະພັກແຂວງ ແລະ ການຕິດຕາມ ຊຸກຍູ້ຂອງ ສະພາປະຊາຊົນແຂວງ ເຮັດໃຫ້ແຂວງ ຍັງຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນ ລະບຽບຮຽບຮ້ອຍ ໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວບັນລຸ 5,3%; ລວມຍອດຜະລິດຕະພັນພາຍໃນບັນລຸໄດ້ 24.108 ຕື້ກີບ, ລາຍໄດ້ສະເລ່ຍຕໍ່ຫົວຄົນບັນລຸ 2.567 ໂດລາ; ສາມາດປະຕິບັດເກັບລາຍຮັບເຂົ້າງົບປະມານໄດ້ທັງໝົດ 2.455 ຕື້ກີບ ເທົ່າກັບ 88,78% ຂອງແຜນການ, ໃນນັ້ນ: ພູດສູນກາງປະຕິບັດໄດ້ 1.169,45 ຕື້ກີບ ເທົ່າກັບ 85,67% ຂອງແຜນການ ແລະ ລາຍຮັບພາຍໃນແຂວງໄດ້ 1.285,56 ຕື້ກີບ ເທົ່າກັບ 91,8% ຂອງແຜນການ. ການຄຸ້ມຄອງລາຍຈ່າຍປະຕິບັດໄດ້ 1.007,9 ຕື້ກີບ ເທົ່າກັບ 133,64% ຂອງແຜນການ; ການລົງທຶນເພື່ອການພັດທະນາບັນລຸໄດ້ 5.314,46 ຕື້ກີບ ເທົ່າກັບ 102,3% ຂອງແຜນການ; ການປູກພືດເປັນສິນຄ້າບັນລຸໄດ້ 2.718.706,65 ໂຕນ, ສາມາດສົ່ງອອກສິນຄ້າໄປຕ່າງປະເທດບັນລຸ 133,43 ລ້ານໂດລາ; ການປະຕິບັດຄາດໝາຍດ້ານວັດທະນະທຳ-ສັງຄົມ ສາມາດບັນລຸໄດ້ ໂດຍສະເພາະ ອັດຕາການເຂົ້າຮຽນຊັ້ນປະຖົມ, ອັດຕາການຕາຍຂອງແມ່ ແລະ ເດັກນ້ອຍລຸ່ມ 5 ປີ, ການຂະຫຍາຍອັດຕາການປົກຄຸມປະກັນສັງຄົມ, ການຂະຫຍາຍຕາ

ໜ່ວງປົກປ້ອງເດັກຂັ້ນບ້ານ ແລະ ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໃນພາລະກິດປະຕິບັດຊາດ ປະຊາທິປະໄຕ.

**ມາດຕາ 4 ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈໍາປີ 2026**

ກອງປະຊຸມເຫັນດີ ຮັບຮອງເອົາ 7 ທິດທາງລວມ, 6 ເປົ້າໝາຍ, 23 ແຜນວຽກຈຸດສຸມ ແລະ ຄາດໝາຍສູ້ ຊົນຂອງບັນດາຂະແໜງການທີ່ວາງໄວ້ໃນແຕ່ລະດ້ານ ດັ່ງນີ້:

1. ຄາດໝາຍເສດຖະກິດມະຫາພາກ

1.1 ການເຕີບໂຕເສດຖະກິດ

ສູ້ຊົນໃຫ້ເສດຖະກິດຂະຫຍາຍຕົວ 5,5% ຂຶ້ນໄປ, ລວມຍອດຜະລິດຕະພັນພາຍໃນທັງໝົດ 24.875 ຕື້ກີບ, ລາຍຮັບຕໍ່ຫົວຄົນໃຫ້ໄດ້ 2.836,9 ໂດລາ. ໃນນັ້ນ:

- ຂະແໜງກະສິກໍາ ຂະຫຍາຍຕົວ 5,3% ກວມເອົາ 51% ຂອງ GDP;
- ຂະແໜງອຸດສາຫະກໍາ ຂະຫຍາຍຕົວ 5,5% ກວມເອົາ 25,5% ຂອງ GDP;
- ຂະແໜງບໍລິການ ຂະຫຍາຍຕົວ 5,8% ກວມເອົາ 22,4% ຂອງ GDP;
- ພາສີ-ອາກອນ ຂະຫຍາຍຕົວ 2,1% ກວມເອົາ 1,1% ຂອງ GDP.

1.2 ດ້ານງົບປະມານ

- ດ້ານລາຍຮັບ: ເກັບລາຍຮັບເຂົ້າງົບປະມານທັງໝົດ 3.033,65 ຕື້ກີບ, ໃນນັ້ນ:
  + ລາຍຮັບພູດສູນກາງ ໃຫ້ໄດ້ 1.353,28 ຕື້ກີບ;
  + ລາຍຮັບພາຍໃນແຂວງໃຫ້ໄດ້ 1.680,37 ຕື້ກີບ, ໃນນີ້: ລາຍຮັບສ່ວຍສາອາກອນ 1.385,97 ຕື້ກີບ ແລະ ລາຍຮັບຊັບສິນຂອງລັດ, ຄຸ້ມຄອງວິສາຫະກິດ 294,40 ຕື້ກີບ.
- ດ້ານລາຍຈ່າຍ: ຄຸ້ມຄອງລາຍຈ່າຍບໍ່ໃຫ້ເກີນ 1.244,94 ຕື້ກີບ, ໃນນັ້ນ:
  + ເງິນເດືອນ (ພາກ 60) 827,00 ຕື້ກີບ;
  + ເງິນນະໂຍບາຍ (ພາກ 61) 86,00 ຕື້ກີບ;
  + ເງິນບໍລິຫານລັດ (ພາກ 62) 72,16 ຕື້ກີບ;
  + ເງິນດັດສົມ-ສົ່ງເສີມ (ພາກ 63) 19,29 ຕື້ກີບ;
  + ເງິນແຮບັງເອີນອື່ນໆ (ພາກ 65) 3,10 ຕື້ກີບ;
  + ເງິນຊື້ຊັບສິນບັດຄົງທີ (ພາກ 66) 0,80 ຕື້ກີບ;
  + ລາຍຈ່າຍການລົງທຶນ (ພາກ 67) 236,58 ຕື້ກີບ.
- ດ້ານດຸ່ນດ່ຽງງົບປະມານ: ເກີນດຸນງົບປະມານໃຫ້ໄດ້ 753,10 ຕື້ກີບ.

1.3 ດ້ານແຫຼ່ງທຶນເພື່ອການພັດທະນາ

ສູ້ຊົນລະດົມທຶນເພື່ອການພັດທະນາ ໃຫ້ໄດ້ 20% ຂອງລວມຍອດຜະລິດຕະພັນພາຍໃນໃຫ້ຄິດຕົວເລກ GDP ມູນຄ່າ 4.975 ຕື້ກີບ, ລະອຽດດັ່ງນີ້:

- ການລົງທຶນຂອງລັດ ໃຫ້ບັນລຸ 7% ຂອງການລົງທຶນທັງໝົດ, ເທົ່າກັບ 348,25 ຕື້ກີບ.
- ທຶນຊ່ວຍເຫຼືອລ້າເພື່ອການພັດທະນາ ໃຫ້ບັນລຸ 5% ຂອງການລົງທຶນທັງໝົດ, ເທົ່າກັບ 248,75 ຕື້ກີບ.
- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ບັນລຸ 55% ຂອງການລົງທຶນທັງໝົດ, ເທົ່າກັບ 2.736,25 ຕື້ກີບ.
- ການລົງທຶນອື່ນໆ ໃຫ້ບັນລຸ 33% ຂອງການລົງທຶນທັງໝົດ, ເທົ່າກັບ 1.641,75 ຕື້ກີບ.

2. ຄາດໝາຍດ້ານເສດຖະກິດ

2.1 ດ້ານກະສິກໍາ ແລະ ສິ່ງແວດລ້ອມ

- ຜະລິດເຂົ້າໃຫ້ໄດ້ 200.000 ໂຕນ;
- ຜະລິດພືດສະບຽງອາຫານໃຫ້ໄດ້ 164.000 ໂຕນ;
- ຜະລິດ ຊີ້ນ, ໄຂ່ ປາ ໃຫ້ໄດ້ 32.924 ໂຕນ;
- ຜະລິດເປັນສິນຄ້າສົ່ງອອກໃຫ້ໄດ້ 850.000 ໂຕນ;
- ການລ້ຽງສັດໃຫ້ຂະຫຍາຍຕົວ 5% ແລະ ສົ່ງອອກສັດໃຫ້ໄດ້ 50.600 ໂຕ;
- ປູກໄມ້ໃຫ້ໄດ້ 4.278 ເຮັກຕາ;
- ສຳຫຼວດ, ຈັດສັນປ່າສະຫງວນຂອງແຂວງ ໃຫ້ໄດ້ 01 ແຫ່ງ ຄື: ປ່າສະຫງວນຜາຂີ້ໝົ້ນ;
- ສຳຫຼວດ, ຈັດສັນປ່າປ້ອງກັນແຫ່ງຊາດ ໃຫ້ໄດ້ 01 ແຫ່ງ ຄື: ປ່າປ້ອງກັນພູໝັ່ງງ-ສົນແກ້ວອຸດອນ;
- ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 7.200 ຕອນ;
- ຂະຫຍາຍກຸ່ມການຜະລິດໃຫ້ໄດ້ 20 ກຸ່ມ;
- ສ້າງສະຫະກອນການຜະລິດໃຫ້ໄດ້ 02 ສະຫະກອນ;
- ສ້າງບ້ານແບບຢ່າງດ້ານກະສິກຳ ໃຫ້ໄດ້ 15 ບ້ານ;
- ສ້າງບ້ານແບບຢ່າງປ່າໄມ້ໃຫ້ໄດ້ 10 ບ້ານ;
- ສ້າງບ້ານພົ້ນທຸກໃຫ້ໄດ້ 06 ບ້ານ ແລະ ຄອບຄົວພົ້ນທຸກໃຫ້ໄດ້ 2.000 ຄອບຄົວ;
- ສ້າງບ້ານພັດທະນາໃຫ້ໄດ້ 08 ບ້ານ ແລະ ຄອບຄົວພັດທະນາໃຫ້ໄດ້ 2.000 ຄອບຄົວ;
- ສ້າງເມືອງພົ້ນທຸກໃຫ້ໄດ້ 01 ເມືອງ ຄື: ເມືອງຊຽງຮ່ອນ..

**2.2 ດ້ານອຸດສາຫະກຳ ແລະ ການຄ້າ**

- ສົ່ງອອກສິນຄ້າໃຫ້ໄດ້ 142,77 ລ້ານໂດລາ;
- ຄຸ້ມຄອງການນຳເຂົ້າສິນຄ້າ ບໍ່ໃຫ້ເກີນ 113,23 ລ້ານໂດລາ;
- ຈົດທະບຽນເຄື່ອງໝາຍການຄ້າໃຫ້ໄດ້ 02 ເຄື່ອງໝາຍ, ໃຫ້ໄດ້ກາໝາຍໂອດອບ ODOP 01 ຜະລິດຕະພັນ;
- ການຜະລິດອຸດສາຫະກຳ-ຫັດຖະກຳ ໃຫ້ໄດ້ 196,6 ຕື້ກີບ ແລະ ຈຳໜ່າຍໃຫ້ໄດ້ 245,9 ຕື້ກີບ;
- ຊື້ພະລັງງານໄຟຟ້າໃຫ້ໄດ້ 273,13 ລ້ານກິໂລວັດໂມງ;
- ຈຳໜ່າຍກະແສໄຟຟ້າ ໃຫ້ໄດ້ 251,26 ລ້ານກິໂລວັດໂມງ;
- ການຂຸດຄົ້ນຖ່ານຫີນໃຫ້ໄດ້ 14,50 ລ້ານໂຕນ;
- ການຂຸດຄົ້ນແຮ່ມັງການ ໃຫ້ໄດ່ 2.000 ໂຕນ;
- ການຂຸດຄົ້ນຫີນປູນໃຫ້ໄດ້ 300.000 ໂຕນ;
- ການຂຸດຄົ້ນແຮ່ຄຳເຂັ້ມຂຸ້ນ ໃຫ້ໄດ້ 3.600 ໂຕນ;

**2.3 ດ້ານໂຍທາທິການ ແລະ ຂົນສົ່ງ**

- ການຂົນສົ່ງໂດຍສານ ໃຫ້ໄດ້ 136.00 ເທື່ອຄົນ;
- ການຂົນສົ່ງສິນຄ້າໃຫ້ໄດ້ 1.500.000 ໂຕນ;
- ຍົກລະດັບເສັ້ນທາງຫຼວງແຫ່ງຊາດ ເລກ4 ຊ່ວງທ່າເດື່ອ ເມືອງໄຊຍະບູລີ ຫາ ດ່ານສາກົນນ້ຳເຫືອງ ເມືອງແກ່ນທ້າວ ໃຫ້ໄດ້ມາດຕະຖານຂອງພາກພື້ນ;
- ຊຸກຍູ້ເອກະຊົນສຶກສາສຳຫຼວດ ການກໍ່ສ້າງທາງດ່ວນ ດ່ານສາກົນນ້ຳເຫືອງ ເມືອງແກ່ນທ້າວ ຫາ ເມືອງໄຊຍະບູລີ;
- ຍົກລະດັບທາງຫຼວງແຫ່ງຊາດ ເລກທີ 4A ຊ່ວງແຕ່ບ້ານທ່ານາ ເມືອງໄຊຍະບູລີ ຫາ ເມືອງຫົງສາ;
- ຍົກລະດັບທາງວົງແອນ ເມືອງໄຊຍະບູລີ-ເມືອງໄຊສະຖານ-ເມືອງຫົງສາ;
- ຍົກລະດັບທາງວົງແອນ ບ້ານນາແອນ ເມືອງພຽງ-ເມືອງທົ່ງມີໄຊ-ຜາແກ້ວບອມເລົາ ເມືອງປາກລາຍ;

- ຂະຫຍາຍລວງຍາວເສັ້ນທາງປູຢາງໃຫ້ໄດ້ 20 ກິໂລແມັດ ແລະ ທາງຮ່ອມເບຕົງ ໃຫ້ໄດ້ 2 ກິໂລແມັດ;
- ກໍ່ສ້າງລະບົບປ້ອງກັນການເຊາະເຈື່ອນແມ່ນ້ຳເຫືອງ ໃຫ້ໄດ້ 16 ຈຸດ, ລວງຍາວ 22,82 ກິໂລແມັດ;
- ພັດທະນາທ່າເຮືອເພື່ອຮອງຮັບເຮືອນຳທ່ຽວ, ການຂົນສົ່ງໂດຍການທາງນ້ຳ ແລະ ເຮືອບັນທຸກສິນຄ້າ 500 ໂຕນ ໃຫ້ໄດ້ 1 ແຫ່ງ;
- ສ້າງລະບົບໂລຈິດສຕິກຢູ່ດ່ານສາກົນ ໃຫ້ໄດ້ 4 ແຫ່ງ;
- ຂະຫຍາຍສະຖານີຂົນສົ່ງໂດຍສານທາງບົກ ໃຫ້ໄດ້ 1 ແຫ່ງ;
- ປັບປຸງຂະຫຍາຍສະໜາມບິນໃຫ້ສາມາດຮອງຮັບເຮືອບິນຂະໜາດໃຫຍ່ ໃຫ້ໄດ້ 1 ແຫ່ງ.

**2.4 ດ້ານເຕັກໂນໂລຊີ ແລະ ການສື່ສານ**

- ຂະຫຍາຍການນຳໃຊ້ລະບົບການສື່ສານພາກລັດ, ລະບົບການບໍລິຫານຫ້ອງການທັນສະໄໝ ແລະ ສ້າງເວັບໄຊຂອງພາກລັດໃຫ້ໄດ້ 03 ພະແນກການຂັ້ນແຂວງ ແລະ 03 ເມືອງ;
- ສ້າງລາຍຮັບດ້ານໄປສະນີ ແລະ ໂທລະຄົມມະນາຄົມ ໃຫ້ໄດ້ 98,163 ລ້ານກີບ;
- ຂະຫຍາຍສັນຍານໂທລະສັບ ໃຫ້ໄດ້ 03 ບ້ານ ແລະ ແກ້ໄຂບ້ານທີ່ບໍ່ມີສັນຍານອິນເຕີເນັດ ໃຫ້ໄດ້ 09 ບ້ານ;
- ສ້າງບຸກຄະລາກອນຂອງບັນດາພະແນກການຂັ້ນແຂວງ ແລະ ເມືອງ ໃຫ້ມີຄວາມຮູ້ດ້ານ ICT; ດ້ວຍການຈັດຝຶກອົບຮົມໃຫ້ໄດ້ 02 ຊຸດ ແລະ ມີບຸກຄະລາກອນເຂົ້າຮ່ວມຫຼາຍກວ່າ 50 ຄົນ.

**3. ຄາດໝາຍດ້ານວັດທະນະທຳ-ສັງຄົມ**

**3.1 ດ້ານສຶກສາທິການ-ກິລາ**

- ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ໃຫ້ໄດ້ 97% ຂຶ້ນໄປ;
- ອັດຕາເຂົ້າຮຽນໃໝ່ລວມ ຂັ້ນ ປ.1 ໃຫ້ບັນລຸ 101 - 100%;
- ອັດຕາເຂົ້າຮຽນໃໝ່ສຸດທິ ຂັ້ນ ປ.1 ບໍ່ໃຫ້ຫຼຸດ 99%;
- ອັດຕາເຂົ້າຮຽນສຸທິຊັ້ນປະຖົມ (6 - 10ປີ) ບໍ່ໃຫ້ລຸດ 99%;
- ອັດ-ຕາເຂົ້າຮຽນໃໝ່ລວມຂັ້ນ ປ.5 ໃຫ້ບັນລຸ 101 - 100%;
- ອັດຕາປະລະຂັ້ນ ປ 1 ບໍ່ໃຫ້ເກີນ 1.8%;
- ອັດຕາຈົບຊັ້ນປະຖົມ ( ອັດຕາເລື່ອນຂັ້ນ-ຈົບຊັ້ນ ) ບໍ່ໃຫ້ລຸດ 97%;
- ອັດຕາຄ້າງຫ້ອງຊັ້ນປະຖົມ ບໍ່ໃຫ້ເກີນ 1.6%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ( ທຽບໃສ່ນັກຮຽນຕົ້ນປີ ປ.5 ) ໃຫ້ໄດ້ 89%;
- ອັດຕາປະລະຊັ້ນປະຖົມ ບໍ່ໃຫ້ເກີນ 1.7%;
- ດັດສະນີຄວາມສະເໝີພາຍິງ-ຊາຍຂອງອັດຕາເລື່ອນຊັ້ນ ປ.5 ຫາ ມ.1 ຢູ່ລະຫວ່າງ (0.97 – 1.03);
- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ ໃຫ້ໄດ້ 79%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ ໃຫ້ໄດ້ 39%;
- ອັດຕາເຂົ້າຮຽນໃໝ່ລວມ ມ.4 ໃຫ້ໄດ້ 67%;
- ອັດຕາປະລະມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 12%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 800 ຄົນ;
- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ໃຫ້ໄດ້ 35%;

- ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ໄດ້ 2%;
- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ ເຂົ້າຮ່ວມການສ້າງຂະບວນເພື່ອສຸຂະພາບເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວກິດຈະກຳການແຂ່ງຂັນກິລາປະຈຳປີ, ກິລາບຸນປະເພນີ ແລະ ກິລາບຸນວັນສຳຄັນຕ່າງໆຂອງຊາດ-ສາກົນ ໃຫ້ໄດ້ 45%;
- ຄົ້ນຄວ້າ-ວິໄຈສະພາບການສຶກສາ,ວິທະຍາສາດ ແລະ ກິລາໃຫ້ໄດ້ຢ່າງນ້ອຍ 3 ຫົວຂໍ້ຂື້ນໄປ.

3.2 ດ້ານສາທາລະນະສຸກ

- ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ມີລວງສູງຕໍ່າກວ່າມາດຕະຖານ ບໍ່ໃຫ້ເກີນ 12% ຂອງກຸ່ມເປົ້າໝາຍ;
- ອັດຕາເດັກນ້ອຍລຸ່ມ 05 ປີ ທີ່ຂາດສານອາຫານກະທັນຫັນ (ຈ່ອຍຜອມ) ບໍ່ໃຫ້ເກີນ 9% ຂອງກຸ່ມເປົ້າໝາຍ;
- ອັດຕາເດັກນ້ອຍລຸ່ມ 05 ປີທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ ບໍ່ໃຫ້ເກີນ 12% ຂອງກຸ່ມເປົ້າໝາຍ;
- ອັດຕາການຕາຍຂອງເດັກເກີດໃໝ່ ບໍ່ໃຫ້ເກີນ 10/1.000 ຄົນ ເດັກນ້ອຍເກີດມີຊີວິດ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 05 ປີ ບໍ່ໃຫ້ເກີນ 12/1.000 ຄົນ ເດັກນ້ອຍເກີດມີຊີວິດ;
- ອັດຕາສ່ວນການຕາຍຂອງແມ່ ບໍ່ໃຫ້ເກີນ 90/100.000 ຄົນ ເດັກນ້ອຍເກີດມີຊີວິດ;
- ອັດຕາເກີດລູກມີແພດຊ່ວຍ ໃຫ້ໄດ້ 82,8% ຂອງກຸ່ມເປົ້າໝາຍ;
- ອັດຕາໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 01 ປີ ໃຫ້ໄດ້ 89% ຂອງກຸ່ມເປົ້າໝາຍ;
- ອັດຕາການປົກຄຸມການປິ່ນປົວພະຍາດວັນນະໂລກ ໃຫ້ໄດ້ 90% ຂອງກຸ່ມເປົ້າໝາຍ;
- ອັດຕາການຕິດເຊື້ອໄຂ້ມາລາເຣຍ (ລວມທຸກຊະນິດເຊື້ອ) ບໍ່ໃຫ້ມີຈັກ ລະນີ (0 ກ ລະນີ);
- ຊາຍ-ຍິງທີ່ມີອາຍຸ 15-24 ປີ ມີຄວາມຮູ້-ເຂົ້າໃຈ ປ້ອງກັນການຕິດເຊື້ອເຮສໄອວີ (HIV) ໃຫ້ໄດ້ 40%;
- ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ໃຫ້ໄດ້ 100% ຂອງປະຊາກອນທັງໝົດ;
- ເພີ່ມອັດຕາການບໍລິໂພກເກືອໄອໂອດີນຂອງຄົວເຮືອນ ໃຫ້ໄດ້ 20% ຂອງກຸ່ມເປົ້າໝາຍ;
- ອັດຕາຊົມໃຊ້ນໍ້າສະອາດ ໃຫ້ໄດ້ 98% ຂອງຈຳນວນປະຊາກອນທັງໝົດ;
- ອັດຕາຊົມໃຊ້ວິດຖ່າຍຄອບຄົວໃຫ້ໄດ້ 98% ຂອງຈຳນວນ ຄອບຄົວທັງໝົດ;
- ເປີເຊັນທີ່ມີແພດປິ່ນປົວ, ຜະດຸງຄັນ ແລະ ພະຍາບານ ໃຫ້ໄດ້ 48% ຂອງສະຖານທີ່ບໍລິການທັງໝົດ.

3.3 ດ້ານແຮງງານ ແລະ ສະຫວັດດີການ-ສັງຄົມ

- ຝຶກ ແລະ ພັດທະນາສີມືແຮງງານໃຫ້ກຳລັງແຮງງານ ໃຫ້ໄດ້ 1.300 ຄົນ;
- ຈັດຫາງານພາຍໃນໃຫ້ກຳລັງແຮງງານລາວເຂົ້າເຮັດວຽກໃຫ້ໄດ້ 1.200 ຄົນ;
- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 5,485 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 57/ລບ, ລົງວັນທີ 27 ມັງກອນ 2025 ໃຫ້ຜູ້ທີ່ມີຄຸນງາມຄວາມດີໃນ ພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕໃຫ້ໄດ້ຈຳນວນ 166 ທ່ານ;
- ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ໄດ້ 23 ບ້ານ;
- ຂະຫຍາຍຄະນະກຳມະການຕາໜ່າງປົກປ້ອງເດັກຂັ້ນບ້ານ ໃຫ້ໄດ້ 25 ບ້ານ.

3.4 ດ້ານວັດທະນະທຳ ແລະ ທ່ອງທ່ຽວ

- ສ້າງເມືອງວັດທະນະທຳ ໃຫ້ໄດ້ 01 ເມືອງ, ບ້ານວັດທະນະທຳ ໃຫ້ໄດ້ 04 ບ້ານ ແລະ ຄອບຄົວວັດທະນະທຳ ໃຫ້ໄດ້ 500 ຄອບຄົວ;
- ຂຶ້ນທະບຽນມໍລະດົກທ້ອງຖິ່ນຂັ້ນແຂວງ ໃຫ້ໄດ້ 1 ແຫ່ງ;
- ສ້າງບ້ານວັດທະນະທຳຕົວແບບ ໃຫ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ໃຫ້ໄດ້ 1 ບ້ານ;

- ສ້າງກົມກອງວັດທະນະທໍາ 10 ກົມກອງ.

**ມາດຕາ 5 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈໍາປີ 2026**

ກອງປະຊຸມ ເຫັນດີຮັບຮອງເອົາ 3 ມາດຕະການຈັດຕັ້ງປະຕິບັດ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2026 ໃຫ້ບັນລຸໄດ້ຕາມຈຸດປະສົງ ແລະ ແຜນການທີ່ວາງໄວ້. ກອງປະຊຸມ ສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ປະຕິບັດບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ ຈັດຕັ້ງຜັນຂະຫຍາຍມະຕິ ຂອງກົມການເມືອງສູນກາງພັກ ກ່ຽວກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່ ໃຫ້ເປັນຮູບປະທໍາຫຼາຍຂຶ້ນ ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຮັບປະກັນໃຫ້ເສດຖະກິດຂະຫຍາຍ 5,5% ຂຶ້ນໄປ;
2. ເພີ່ມທະວີການຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການລົງທຶນຂອງລັດ ຈັດລຽງໂຄງການບູລິມະສິດຢ່າງມີຈຸດສຸມ, ສົ່ງເສີມການມີສ່ວນຮ່ວມຂອງສັງຄົມເຂົ້າໃນການພັດທະນາ, ປັບປຸງພື້ນຖານໂຄງລ່າງເສັ້ນທາງ ໃຫ້ສາມາດນໍາໃຊ້ໄດ້ຢ່າງໄລ່ງລຽນໂດຍໄວ;
3. ສືບຕໍ່ຄົ້ນຄວ້າແຜນງົບປະມານ ໃຫ້ສອດຄ່ອງກັບຄວາມສາມາດ ແລະ ທ່າແຮງບົ່ມຊ້ອນຂອງຖານລາຍຮັບທີ່ມີຢູ່ໃນປັດຈຸບັນ ແລະ ຖານລາຍຮັບໃໝ່, ກໍານົດມາດຕະການ ແລະ ກົນໄກການຈັດເກັບລາຍຮັບໃຫ້ຄົບຖ້ວນ, ຫຼຸດຜ່ອນການຮົ່ວໄຫຼຂອງງົບປະມານໃຫ້ໄດ້ຕາມແຜນ;
4. ເອົາໃຈໃສ່ປັບປຸງຂໍ້ຕົກລົງວ່າດ້ວຍການກໍານົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ສະບັບເລກທີ 246/ຈຂ.ຊຍ, ລົງວັນທີ 18 ມີນາ 2021 ໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ຄໍາແນະນໍາວ່າດ້ວຍການປະເມີນລາຄາທີ່ດິນ ເພື່ອປະກອບກອນສ່ວນສ້າງລາຍຮັບເຂົ້າງົບປະມານ ແລະ ການພັດທະນາເສດຖະກິດ-ສັງຄົມ;
5. ເອົາໃຈໃສ່ສ້າງສະພາບແວດລ້ອມການດໍາເນີນທຸລະກິດ ໃຫ້ມີຄວາມວ່ອງໄວ, ຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ເຂັ້ມແຂງ ເພື່ອທົດແທນການນໍາເຂົ້າ ແລະ ປຸງແຕ່ງເປັນສິນຄ້າເພື່ອສົ່ງອອກໃຫ້ຫຼາຍຂຶ້ນ, ຄຽງຄູ່ກັບການຄຸ້ມຄອງລາຄາສິນຄ້າ ບໍ່ໃຫ້ສົ່ງຜົນກະທົບຕໍ່ການດໍາລົງຊີວິດຂອງປະຊາຊົນ;
6. ເອົາໃຈໃສ່ປະຕິບັດຄາດໝາຍດ້ານກະສິກໍາ ແລະ ຄຸ້ມຄອງສິ່ງແວດລ້ອມ ໃຫ້ບັນລຸຕາມແຜນການ ໄປຕາມທິດສີຂຽວ, ຍືນຍົງ ໂດຍສະເພາະການຂຶ້ນທະບຽນອອກໃບຕາດິນ, ການປູກ ແລະ ຟື້ນຟູປ່າ, ກຽມຄວາມພ້ອມຮັບມື ແລະ ແກ້ໄຂຜົນກະທົບຈາກໄພພິບັດທໍາມະຊາດໃຫ້ທັນການ;
7. ສືບຕໍ່ປະເມີນຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ເຫັນໄດ້ຜົນສໍາເລັດ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອສ້າງເປັນແຜນງານລະອຽດຂອງບັນດາຂະແໜງການ ແລະ ເຊື່ອມສານເຂົ້າ ໃນຄາດໝາຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ;
8. ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍຂອງຂະແໜງການວັດທະນະທໍາ-ສັງຄົມ ທີ່ຍັງມີຄວາມຄືບໜ້າໜ້ອຍ ເປັນຕົ້ນ ການສົ່ງເສີມການເຂົ້າຮຽນໃໝ່ຊັ້ນປະຖົມ, ມັດທະຍົມ ແລະ ສາຍອາຊີວະສຶກສາ-ຝຶກອົບຮົມວິຊາຊີບ, ພ້ອມທັງປັບປຸງຄຸນນະພາບການຮຽນ-ການສອນໃນທຸກຊັ້ນຮຽນ, ສືບຕໍ່ແກ້ໄຂບັນຫາການຂາດແຄນຄູ ແລະ ການປະລະການຮຽນ, ເອົາໃຈໃສ່ປັບປຸງຄຸນນະພາບການບໍລິການດ້ານສາທາລະນະສຸກ, ພັດທະນາກໍາລັງແຮງງານໃຫ້ມີສີມື ສາມາດສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ, ສຸມໃສ່ປັບປຸງ ວຽກງານວັດທະນະທໍາ, ຊຸກຍູ້ສົ່ງເສີມການທ່ອງທ່ຽວ ແລະ ພັດທະນາພື້ນຖານໂຄງລ່າງການທ່ອງທ່ຽວ ເປັນຕົ້ນ ສະຖານທີ່ທ່ອງທ່ຽວ, ທີ່ພັກ, ຮ້ານອາຫານ;

9. ເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ປັບປຸງການບໍລິຫານລັດໃຫ້ມີປະສິດທິພາບ, ຊຸກຍູ້ ສົ່ງເສີມການນໍາໃຊ້ເຄືອຂ່າຍ ລະບົບການບໍລິຫານລັດດ້ວຍເອເລັກໂຕຣນິກທີ່ທັນສະໄໝ ຕາມທິດກະທັດຮັດ, ໂປ່ງໃສ, ວ່ອງໄວ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມໃຫ້ເຂັ້ມແຂງກວ່າເກົ່າ.

ມາດຕາ 6 ການຈັດຕັ້ງປະຕິບັດ

1. ມອບໃຫ້ ອົງການປົກຄອງແຂວງຊີ້ນໍາ ບັນດາພະແນກການຂັ້ນແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງຜັນຂະຫຍາຍມະຕິສະບັບນີ້ ໃຫ້ເປັນແຜນງານຈັດຕັ້ງປະຕິບັດລະອຽດ ແລະ ຈັດຕັ້ງປະຕິບັດຕາມແຜນຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກໍາມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ, ສະມາຊິກສະພາປະຊາຊົນແຂວງ ດໍາເນີນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ຕາມພາລະບົດບາດ, ຂອບເຂດ ສິດ ແລະ ໜ້າທີ່ຂອງ ຕົນຢ່າງເຂັ້ມງວດ.

ມາດຕາ 7 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄໍາພັນເພັງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 95 /ສພຂ.ຊຍ
ໄຊຍະບູລີ, ວັນທີ 30 ທັນວາ 2025

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງ ຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງອົງການກວດສອບປະຈຳພາກເໜືອ1

- ອີງຕາມ ມາດຕາ 57 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງເລກທີ 57/ສພຊ, ລົງວັນທີ 24 ມິຖຸນາ 2024;
- ອີງຕາມ ບົດລາຍງານ ຂອງອົງການກວດສອບປະຈຳພາກເໜືອ 1 ສະບັບເລກທີ 545/ອກສ.ພໜ1, ລົງວັນທີ 5 ທັນວາ 2025.

ຜ່ານການປະກອບຄຳເຫັນ, ຄົ້ນຄວ້າ ແລະ ພິຈາລະນາຢ່າງເລິກເຊິ່ງ ຂອງ ສະມາຊິກສະພາປະຊາຊົນແຂວງ ຕໍ່ ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025, ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບປະຈຳພາກເໜືອ 1 ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ລະຫວ່າງວັນທີ 29-30 ທັນວາ 2025.

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາ ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025 ຂອງອົງການກວດສອບປະຈຳພາກເໜືອ 1**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບປະຈຳພາກເໜືອ 1 ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການກວດສອບປະຈຳພາກເໜືອ 1 ດ້ວຍຄວາມຮັບຜິດຊອບສູງ ຊຶ່ງໄດ້ຍົກຜົນສຳເລັດທີ່ພົ້ນເດັ່ນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້. ບົດສະຫຼຸບລາຍງານປະກອບດ້ວຍເນື້ອໃນຕົ້ນຕໍດັ່ງນີ້:

1. ຜົນການກວດສອບຄືນ ການແກ້ໄຂຜົນຂອງການກວດສອບ ປະຈຳປີ 2025 ຕາມມະຕິສະບັບເລກທີ 153/ສພຂ.ຊຍ, ລົງວັນທີ 30 ທັນວາ 2024.
   - 1.1 ໄດ້ແກ້ໄຂ ເງິນທີ່ກວດສອບເຫັນເພີ່ມ ແລະ ໜີ້ຕ້ອງຮັບຊົບສົນ ມອບເຂົ້າງົບປະມານແຫ່ງລັດດ້ວຍເງິນສົດ ຈຳນວນ 0.68 ຕື້ກີບ.

1.2 ແຂວງໄຊຍະບູລີໄດ້ນຳໃຊ້ເງິນເກີນແຜນ ຈຳນວນ 81.90 ຕື້ກີບ, ປະຕິບັດຖືກຕ້ອງຕາມ ຕາມມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 47/ຄປຈ.ຊຍ, ລົງວັນທີ 06 ມິຖຸນາ 2024.

2. **ຜົນການກວດສອບປະຈຳປີ 2024 (ກວດສອບໃນປີ 2025) ປະກອບມີ:**

2.1 ກວດສອບເຫັນເພີ່ມ ລາຍຮັບສ່ວຍສາອາກອນ ແລະ ລາຍຮັບອື່ນໆ ທີ່ບໍ່ມອບເຂົ້າງົບປະມານແຫ່ງລັດ ຈຳນວນ 10.21 ຕື້ກີບ.

2.2 ກວດສອບເຫັນ ໜີ້ຕ້ອງຮັບຂະແໜງຄຸ້ມຄອງຊັບສິນແຫ່ງລັດ ຈຳນວນ 7.41 ຕື້ກີບ.

2.3 ກວດສອບເຫັນ ໜີ້ຕ້ອງຮັບສ່ວຍສາອາກອນປະຈຳແຂວງ ແລະ ສ່ວຍສາອາກອນປະຈຳເມືອງ ຈາກບັນດາຫົວໜ່ວຍທຸລະກິດ ຈຳນວນ 4.01 ຕື້ກີບ.

2.4 ກວດສອບເຫັນໜີ້ຕ້ອງຮັບ ຈາກພັນທະຂອງຜູ້ລົງທຶນທີ່ຍັງຄ້າງມອບ ເງິນຄຸ້ມຄອງສັນຍາໂຄງການຈຳນວນ 11 ໂຄງການ, ເປັນເງິນຈຳນວນ 1 ຕື້ກີບ.

2.5 ກວດສອບເຫັນ 2 ບໍລິສັດ ຍັງຄ້າງວາງເງິນຄ້ຳປະກັນຕາມສັນຍາ ຈຳນວນ 0.65 ຕື້ກີບ, ໃນນີ້: ບໍລິສັດ DM ນ້ຳຮຸງ 3 ໄຮໂດຣພາວເວີ ຈຳກັດ ຈຳນວນ 0.22 ຕື້ກີບ ແລະ ບໍລິສັດ ສີກັນໃຈ ຈຳກັດຜູ້ດຽວ ຈຳນວນ 0.43 ຕື້ກີບ.

2.6 ຄັງເງິນປະຈຳແຂວງ ມີໜີ້ຕ້ອງຮັບສະສົມ ຈາກເງິນຈ່າຍລ່ວງໜ້າໃຫ້ບັນດາ ພະແນກການ ແລະ ເມືອງ ຈຳນວນ 18.31 ຕື້ກີບ.

2.7 ກວດສອບເຫັນ ການອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ເຊົ່າ-ສຳປະທານທີ່ດິນຂອງລັດເພື່ອດຳເນີນກິດຈະການຂຸດຄົ້ນ, ປຸງແຕ່ງແຮ່ທາດ ແລະ ພະລັງງານ ຈຳນວນ 19 ໂຄງການ, ມີເນື້ອທີ່ທັງໝົດ 672,400 ຕາແມັດທີ່ຍັງບໍ່ທັນໄດ້ຫັນທີ່ດິນປ່າໄມ້ເປັນດິນປະເພດອື່ນ.

2.8 ກວດສອບເຫັນ ພະແນກການເງິນແຂວງ ຍັງບໍ່ທັນໄດ້ອອກຂໍ້ຕົກລົງເພື່ອຍົກເລີກສັນຍາເຊົ່າ-ສຳປະທານ ບໍລິສັດນ້ຳສົ່ງພາວເວີ ຈຳກັດ ພາຍຫຼັງສິ້ນສຸດໄລຍະເວລາຕາມບົດບັນທຶກຄວາມເຂົ້າໃຈ ແລະ ໂຄງການດັ່ງກ່າວຍັງມີເງິນຄ້ຳປະກັນໂຄງການຕາມສັນຍາ ຈຳນວນ 0.22 ຕື້ກີບ, ທີ່ຝາກໄວ້ໃນຄັງເງິນປະຈຳແຂວງ.

**ຜ່ານການຕິດຕາມກວດກາ, ສະມາຊິກສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ກອງປະຊຸມໄດ້ຍົກໃຫ້ເຫັນຜົນສຳເລັດທີ່ພົ້ນເດັ່ນ ດັ່ງນີ້:**

1. ສຳລັບການປັບປຸງກົງຈັກການຈັດຕັ້ງ ໄດ້ເລື່ອນ ແລະ ບັນຈຸຊັບຊ້ອນ ຮັກສາການປະທານອົງການກວດສອບປະຈຳພາກເໜືອ 1 ຂຶ້ນເປັນປະທານ, ຄະນະກົມຈາກອົງການກວດສອບແຫ່ງລັດ ມາເປັນຮອງປະທານ ຈຳນວນ 2 ທ່ານ, ຮອງຫົວໜ້າຫ້ອງການຂຶ້ນເປັນຫົວໜ້າຫ້ອງການ, ຮອງຫົວໜ້າພະແນກຂຶ້ນເປັນຫົວໜ້າພະແນກ ຈຳນວນ 3 ທ່ານ, ວິຊາການຂຶ້ນເປັນຮອງຫົວໜ້າພະແນກ 3 ທ່ານ.
2. ດຳເນີນການກວດສອບໃນໄລຍະ 5 ປີ ຜ່ານມາ ໄດ້ຮັບແຜນການກວດສອບ ທັງໝົດ 84 ຫົວໜ່ວຍ ໃນນີ້: ຕາມມະຕິກອງປະຊຸມສະໄໝສາມັນ ສະພາປະຊາຊົນແຂວງ 79 ຫົວໜ່ວຍ ແລະ ຕາມແຜນຂອງອົງການກວດສອບແຫ່ງລັດ 5 ຫົວໜ່ວຍ ເຊິ່ງສາມາດປະຕິບັດໄດ້ທັງໝົດ 83 ຫົວໜ່ວຍ ເທົ່າກັບ 98,81% ຂອງແຜນການແລະ ສາມາດເກັບເມັດເງິນ ຈາກຜົນການກວດສອບເຂົ້າງົບປະມານແຫ່ງລັດ ໄດ້ທັງໝົດ ຈຳນວນ 2,75 ຕື້ກີບ, (ສະເພາະປີ 2025 ໄດ້ຮັບແຜນການກວດສອບ ຕາມມະຕິກອງປະຊຸມສະພາປະຊາຊົນແຂວງ ທັງໝົດ 17 ຫົວໜ່ວຍ, ປະຕິບັດໄດ້ 16 ຫົວໜ່ວຍ ເທົ່າກັບ 94,12% ຂອງແຜນການປີ).
3. ສະເພາະຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ມີດັ່ງນີ້:

3.1 **ດ້ານລາຍຮັບ**: ກວດສອບເຫັນເພີ່ມ ຈຳນວນ 10.21 ຕື້ກີບ, ເຮັດໃຫ້ລາຍຮັບເພີ່ມຈາກ 1,199.81 ຕື້ກີບ ມາເປັນ 1,210.02 ຕື້ກີບ.

3.2 **ດ້ານລາຍຈ່າຍ**: ກວດສອບເຫັນລາຍຈ່າຍຫຼຸດ ຈຳນວນ 1.23 ຕື້ກີບ, ເຮັດໃຫ້ລາຍຈ່າຍຫຼຸດຈາກ ແຜນ 712.09 ຕື້ກີບ ມາເປັນ 710.86 ຕື້ກີບ.

3.3 **ດຸ່ນດ່ຽງງົບປະມານ**: ກວດເຫັນເພີ່ມ ຈຳນວນ 10.21 ຕື້ກີບ, ເຮັດໃຫ້ເກີນດຸນເພີ່ມຈາກການ ສະຫຼຸບຂອງພະແນກການເງິນແຂວງ ຈຳນວນ 488.95 ຕື້ກີບ ມາເປັນ 499.16 ຕື້ກີບ.

4. ການກວດສອບຫົວຂໍ້ສະເພາະ 2 ຫົວໜ່ວຍຄື: ກວດສອບການຈັດຕັ້ງປະຕິບັດລາຍຮັບສ່ວຍສາອາກອນປະຈຳແຂວງ ແລະ ກວດສອບການຄຸ້ມຄອງລາຍຮັບຊັບສິນແຫ່ງລັດ ກວດເຫັນເງິນທີ່ຕ້ອງມອບໃຫ້ລັດທັງໝົດ ຈຳນວນ 11.42 ຕື້ກີບ, ໃນນີ້: ສ່ວຍສາອາກອນປະຈຳແຂວງ 4.01 ຕື້ກີບ ແລະ ຄຸ້ມຄອງຊັບສິນແຫ່ງລັດ ຈຳນວນ 7.41 ຕື້ກີບ.

ມາດຕາ 2 **ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ 1 ປະຈຳປີ 2026.**

ກອງປະຊຸມ ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ 1 ປະຈຳປີ 2026 ຕາມການສະເໜີຂອງອົງການກວດສອບປະຈຳພາກເໜືອ 1 ດັ່ງນີ້:

1. ສືບຕໍ່ຈັດຕັ້ງຜັນຂະຫຍາຍ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໃຫ້ມີຄວາມລະອຽດເລິກເຊິ່ງ ແລະ ແທດເໝາະກັບສະພາບຕົວຈິງໃນແຕ່ລະໄລຍະ, ສຸມໃສ່ສ້າງນິຕິກຳກ່ຽວກັບການຊຸກຍູ້ການແກ້ໄຂຜົນການກວດສອບ, ການເຂົ້າຮ່ວມພິຈາລະນາໃນການສ້າງ ແລະ ການດັດແກ້ແຜນງົບປະມານແຫ່ງລັດ;
2. ໃນປີ 2026 ສືບຕໍ່ພັດທະນາບຸກຄະລາກອນໃຫ້ມີຄຸນນະພາບ ໂດຍສຸມໃສ່ສ້າງນັກກວດສອບ ຂັ້ນ 1 ໃຫ້ໄດ້ຈຳນວນ 5 ທ່ານ, ຂັ້ນ 2 ໃຫ້ໄດ້ຈຳນວນ 2 ທ່ານ; ບຳລຸງ-ກໍ່ສ້າງ ແລະ ຝຶກອົບຮົມວຽກງານວິຊາສະເພາະໃຫ້ພະນັກງານ-ນັກກວດສອບຢູ່ພາຍໃນ ແລະ ຕ່າງປະເທດ;
3. ສືບຕໍ່ຍົກສູງຄຸນນະພາບການກວດສອບ ໂດຍການສ້າງແຜນການກວດສອບຢ່າງມີຈຸດສຸມ, ດຳເນີນການກວດສອບຢ່າງມີຄຸນນະພາບ, ກວດສອບບັນຫາທີ່ມີຜົນກະທົບຕໍ່ງົບປະມານແຫ່ງລັດ, ບັນຫາທີ່ມີຜົນກະທົບຕໍ່ເສດຖະກິດ-ສັງຄົມ;
4. ດຳເນີນການເຄື່ອນໄຫວວຽກງານການກວດສອບ ແລະ ລົງຕິດຕາມ, ຊຸກຍູ້ແກ້ໄຂຜົນການກວດສອບ ຈຳນວນ 6 ເປົ້າໝາຍ, 17 ຫົວໜ່ວຍ;
5. ພັດທະນາ, ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ເຂົ້າໃນວຽກງານການກວດສອບ ເພື່ອເຮັດໃຫ້ວຽກງານການກວດສອບມີຄວາມວ່ອງໄວ, ຊັດເຈນ, ມີປະສິດທິພາບ, ປະຢັດເວລາ ແລະ ງົບປະມານ;
6. ສືບຕໍ່ປະຕິບັດ, ເສີມຂະຫຍາຍການຮ່ວມມືກັບຕ່າງປະເທດ ຢ່າງມີຫຼັກການ, ປັບປຸງຮູບການ ແລະ ວິທີການຮ່ວມມືຢ່າງມີສຸມ, ມີການເລືອກເຟັ້ນການຮ່ວມມືຢ່າງມີປະສິດທິຜົນ ແລະ ເປັນເຈົ້າການໃຫ້ຫຼາຍຂຶ້ນ ພ້ອມທັງເລືອກເຟັ້ນຫົວຂໍ້, ວຽກງານທີ່ມີຄວາມສຳຄັນ ແລະ ຈຳເປັນ.

ມາດຕາ 3 **ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ 1 ປະຈຳປີ 2026.**

ກອງປະຊຸມຮັບຮອງເອົາ 8 ມາດຕະການແນະນຳປັບປຸງແກ້ໄຂຜົນການກວດສອບ, 5 ມາດຕະການຈັດຕັ້ງປະຕິບັດ ແລະ 6 ຂໍ້ສະເໜີ ຂອງອົງການກວດສອບປະຈຳພາກເໜືອ 1. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ 1 ປະຈຳປີ 2026, ໃຫ້ໄດ້

ຮັບຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍ ກອງປະຊຸມສະພາປະຊາຊົນແຂວງ ສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເອົາໃຈໃສ່ຈັດຕັ້ງປະຕິບັດບາງມາດຕາຂອງກົດໝາຍ ວ່າດ້ວຍການກວດສອບແຫ່ງລັດ ໃຫ້ເປັນຜົນສັກສິດ, ຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍກວດສອບແຫ່ງລັດ ໃຫ້ເປັນນິຕິກໍາໃຕ້ກົດໝາຍໃຫ້ຄົບຖ້ວນ ແລະ ມີເນື້ອຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈໍາພາກເໜືອ 1;
2. ສືບຕໍ່ຕິດຕາມ, ຊີ້ນໍາ, ຊຸກຍູ້ ພະແນກການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກູ້ລາຍຮັບທີ່ກວດເຫັນເພີ່ມ ຈາກການສະຫຼຸບຂາດຕົວການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງ ປີ 2024 ແລະ ແກ້ໄຂຜົນການກວດສອບທີ່ຄ້າງໃນປີຜ່ານມາ ເຂົ້າງົບປະມານປີ 2026;
3. ສຸມໃສ່ກວດສອບບັນດາ ເປົ້າໝາຍ, ຫົວໜ່ວຍ, ພ້ອມທັງຕິດຕາມກວດກາ ການແກ້ໄຂຜົນຂອງການກວດສອບທີ່ຍັງຄ້າງໃນໄລຍະຜ່ານມາ ຕາມຄໍາແນະນໍາວ່າດ້ວຍການແກ້ໄຂຜົນຂອງການກວດສອບໃຫ້ເຂັ້ມງວດ;
4. ປະສານສົມທົບກັບຢ່າງເປັນປົກກະຕິລະຫວ່າງ ອົງການກວດສອບປະຈໍາພາກເໜືອ 1 ກັບ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ ແລະ ເປົ້າໝາຍຖືກກວດສອບ ໃນການສະໜອງຂໍ້ມູນເພື່ອແນ່ໃສ່ການແກ້ໄຂຜົນການກວດສອບໃຫ້ມີຜົນສັກສິດ;
5. ສືບຕໍ່ເອົາໃຈໃສ່ກໍ່ສ້າງພັດທະນາພະນັກງານ ແລະ ຍົກລະດັບຄວາມຮູ້ທາງວິຊາສະເພາະ ໃຫ້ນັກກວດສອບແຕ່ລະຂັ້ນ ໃຫ້ກາຍເປັນນັກກວດສອບທີ່ຊໍານານ ແລະ ເປັນມືອາຊີບໃຫ້ໄດ້ຫຼາຍຂຶ້ນ;
6. ເອົາໃຈໃສ່ຫັນເປັນທັນສະໄໝ ວຽກງານກວດສອບ ໂດຍນໍາໃຊ້ເຕັກໂນໂລຊີ, ອຸປະກອນ, ເຄື່ອງມືເຂົ້າໃນວຽກງານກວດກາໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນປະສິກທິພາບ, ປະສິດທິຜົນສູງຂຶ້ນ.

**ມາດຕາ 4 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນໍາບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມາດຕະການຕໍ່ກັບຜົນຂອງການກວດສອບ ຕາມມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການກວດສອບປະຈໍາພາກເໜືອ 1 ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກໍາມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງ ຢູ່ບັນດາເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້, ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງບີລັນ ຄໍາພັນເພັງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 96 /ສພຂ.ຊຍ

ໄຊຍະບູລີ, ວັນທີ 30 ທັນວາ 2025

**ມະຕິ**

**ກອງປະຊຸມສະພາປະຊາຊົນແຂວງ**

**ວ່າດ້ວຍການຮັບຮອງ ຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງອົງການກວດກາລັດແຂວງ**

- ອີງຕາມ ມາດຕາ 57 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນແຂວງ, ສະບັບປັບປຸງເລກທີ 57/ສພຊ, ລົງວັນທີ 24 ມິຖຸນາ 2024;
- ອີງຕາມ ບົດລາຍງານຂອງອົງການກວດກາລັດແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV, ສະບັບເລກທີ 586/ອກລຂ, ລົງວັນທີ 9 ທັນວາ 2025.

ຜ່ານການປະກອບຄຳເຫັນ, ຄົ້ນຄວ້າ, ພິຈາລະນາຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ  ປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງອົງການກວດກາລັດແຂວງ. ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ລະຫວ່າງວັນທີ 29-30 ທັນວາ 2025.

**ກອງປະຊຸມຕົກລົງ:**

**ມາດຕາ 1 ຮັບຮອງເອົາ ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາລັດແຂວງ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການກວດກາລັດແຂວງ ໃນການແກ້ໄຂຜົນຂອງການກວດສອບ ແລະ ກວດກາ ຄືການປະຕິບັດບັນດາມາດຕະການ ແລະ ການແນະນຳຂອງອົງການກວດສອບ ດ້ວຍຄວາມຮັບຜິດຊອບສູງ, ຊຶ່ງໄດ້ຍົກໃຫ້ເຫັນຜົນສຳເລັດທີ່ພົ້ນເດັ່ນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້. ບົດສະຫຼຸບລາຍງານ ປະກອບໂດຍເນື້ອໃນຕົ້ນຕໍ ດັ່ງນີ້:

1. **ການເຄື່ອນໄຫວວຽກງານຕາມພາລະບົດບາດ ປະກອບມີ:** (1) ວຽກງານການຄົ້ນຄວ້າ, ຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ນິຕິກຳກ່ຽວກັບວຽກງານກວດກາ, (2) ວຽກງານຕິດຕາມ-ກວດກາບໍລິຫານລັດ ແລະ ການແກ້ໄຂຜົນການກວດກາ (3) ວຽກງານສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນ (4) ວຽກງານຄົ້ນຄວ້າຄຳຮ້ອງ  ຄຳສະເໜີ;
2. **ການເຄື່ອນໄຫວຕາມມະຕິກອງປະຊຸມ ສະພາປະຊາຊົນແຂວງ ປະກອບມີ:** ໃນໄລຍະ 5 ປີຜ່ານມາ ໄດ້ຕິດຕາມແກ້ໄຂຜົນຂອງການກວດສອບ ຕາມມະຕິກອງປະຊຸມສະໄໝສາມັນ ສະພາປະຊາຊົນ

ແຂວງ ທັງໝົດ 45 ກໍລະນີ, ໃນນີ້: ໄດ້ຮັບການປັບປຸງແກ້ໄຂຂາດຕົວ 25 ກໍລະນີ, ໄດ້ຮັບການປັບປຸງແກ້ໄຂແຕ່ບໍ່ຂາດຕົວ 18 ກໍລະນີ, ຍັງບໍ່ທັນໄດ້ຮັບການແກ້ໄຂ 2 ກໍລະນີ (ສະເພາະປີ 2025 ໄດ້ຕິດຕາມກວດກາຕາມມະຕິ ຂອງສະພາປະຊາຊົນແຂວງ ສະບັບເລກທີ 154/ສພຂ.ຊຍ, ລົງວັນທີ 30 ທັນວາ 2024 ມີທັງໝົດ 28 ກໍລະນີ, ໃນນີ້: ກໍລະນີໄດ້ປັບປຸງແກ້ໄຂຂາດຕົວ 8 ກໍລະນີ, ກໍລະນີໄດ້ປັບແກ້ໄຂແຕ່ບໍ່ຂາດຕົວ 18 ກໍລະນີ ແລະ ກໍລະນີຍັງບໍ່ທັນໄດ້ຮັບການປັບປຸງແກ້ໄຂ 2 ກໍລະນີ)

3. **ການຕິດຕາມ-ກວດກາ, ຊຸກຍູ້ ແລະ ການແກ້ໄຂຜົນຂອງການກວດກາ ໃນ 3 ກຸ່ມວຽກຄື:** (1) ໄດ້ສົມທົບກັບອົງການກວດກາແຫ່ງລັດ ກວດກາຕາມມະຕິສະພາແຫ່ງຊາດ ສະບັບເລກທີ 77/ສພຊ ລົງວັນ 30 ທັນວາ 2022 ແລະ ສະບັບເລກທີ 113/ສພຊ, ລົງວັນທີ 21 ພະຈິກ 2023, (2) ກວດກາຕາມມະຕິຂອງສະພາປະຊາຊົນແຂວງ ສະບັບລົງວັນທີ 154/ສພຂ, ລົງວັນທີ 30 ທັນວາ 2024 ແລະ (3) ກວດກາຕາມແຈ້ງການຂອງຫ້ອງການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 130/ຫສນຍ.

**ຜ່ານການຕິດຕາມກວດກາ , ຂອງສະມາຊິກສະພາປະຊາຊົນແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ, ກອງປະຊຸມໄດ້ຍົກໃຫ້ເຫັນຜົນສໍາເລັດທີ່ພົ້ນເດັ່ນ ດັ່ງນີ້:**

1. ໃນໄລຍະຜ່ານມາ ອົງການກວດກາລັດແຕ່ລະຂັ້ນ ໄດ້ເຄື່ອນໄຫວຕິດຕາມ-ກວດກາ, ການປະຕິບັດກົດໝາຍ, ນິຕິກໍາໃຕ້ກົດໝາຍ, ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຄວາມຮັບຜິດຊອບຂອງຕົນຢ່າງເປັນປົກກະຕິ ເພື່ອເປັນການສະກັດກັ້ນ ປະກົດການຫຍໍ້ທໍ້ແຕ່ຫົວທີ;
2. ຕິດຕາມການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງລັດ 5 ປີ, ຄັ້ງທີ VIII ເຫັນວ່າເສດຖະກິດຂະຫຍາຍຕົວສະເລ່ຍ 4,79%, ແຜນການເບື້ອງຕົ້ນສະເລ່ຍ 5% ລາຍຮັບສະເລ່ຍຕໍ່ຫົວຄົນປະຕິບັດໄດ້ 16,153 ຕື້ກີບ ເທົ່າກັບ 1,759 ໂດລາ ທຽບໃສ່ແຜນ 5 ປີ ຍັງບໍ່ທັນບັນລຸ ຍ້ອນການອ່ອນຄ່າຂອງເງິນກີບ;
3. ຕິດຕາມການລົງທຶນຂອງລັດທັງໝົດ 1.022 ໂຄງການ ມູນຄ່າ 24.747 ຕື້ກີບ, ໃນນີ້: ທຶນພາຍໃນ 3,982 ຕື້ກີບ, ທຶນຕ່າງປະເທດ 20,765 ຕື້ກີບ, ທຶນຊ່ວຍເຫຼືອລ້າກວມເອົາ 58% ການລົງທຶນພາຍໃນຂົງເຂດເສດຖະກິດ 2,150 ຕື້ກີບ, ຂົງເຂດວັດທະນະທໍາສັງຄົມ 956 ຕື້ກີບ ແລະ ຂົງເຂດອື່ນໆ 876 ຕື້ກີບ;
4. ກວດກາໂຄງການລົງທຶນຂອງລັດ ຕາມແຈ້ງການ ຂອງຫ້ອງການສໍານັກງານນາຍົກ ສະບັບເລກທີ 130/ຫສນຍ ຈໍານວນ 165 ໂຄງການ ມູນຄ່າ 495,25 ຕື້ກີບ, ຊໍາລະແລ້ວມູນຄ່າ 179,72 ຕື້ກີບ ແລະ ຍັງຄ້າງຊໍາລະມູນຄ່າ 315,53 ຕື້ກີບ ຜ່ານການກວດກາພົບເຫັນການຈັດຕັ້ງປະຕິບັດບໍ່ຖືກຕ້ອງຕາມລະບຽບກົດໝາຍ ຈໍານວນ 49 ໂຄງການ ມູນຄ່າ 12,98 ຕື້ກີບ ແລະ ໄດ້ຫັກລົບອອກຈາກເພດານການລົງທຶນຂອງລັດ ຈໍານວນ 39 ໂຄງການ;
5. ຕິດຕາມການຈັດຕັ້ງປະຕິບັດແຜນລາຍຮັບງົບປະມານ ປະຕິບັດ 9,233.27 ຕື້ກີບ, ທຽບໃສ່ແຜນປີ 2020 ປະຕິບັດ 179,30%, ການປະຕິບັດລາຍຈ່າຍປະຕິບັດໄດ້ 3,381.89 ຕື້ກີບ ທຽບໃສ່ແຜນການປີ 2020 ເພີ່ມຂຶ້ນ 44,97%;
6. ໄດ້ສົມທົບກັບອົງການກວດກາແຫ່ງລັດ ຕິດຕາມກວດກາຕາມມະຕິສະພາແຫ່ງຊາດ ສະບັບເລກທີ 77/ສພຊ, ລົງວັນທີ 30 ທັນວາ 2022 ຈໍານວນ 2 ໂຄງການຄື: ໂຄງການທະລຸຍົກລະດັບເສັ້ນທາງຕັດໃໝ່ ສາມແຍກນໍ້າຊາວ ຫາບ້ານຫ້ວຍຽງ ເມືອງປາກລາຍ ແລະ ຕິດຕາມໂຄງການກໍ່ສ້າງອ່າງເກັບນໍ້າມ້າວ, ນໍ້າແໜ້ນ ເມືອງຊຽງຮ່ອນ;
7. ການຕິດຕາມ, ຊຸກຍູ້ ການແກ້ໄຂ ຜົນຂອງການກວດກາກໍລະນີແກ່ຍາວມາຫຼາຍປີ ແລະ ກໍລະນີ ເກີດຂຶ້ນໃໝ່ ລວມມີທັງໝົດ 28 ກໍລະນີ, ໄດ້ຮັບການປັບປຸງແກ້ໄຂຂາດຕົວ ມີ 8 ກໍລະນີ, ກໍລະນີໄດ້ຮັບ

ການປັບປຸງແກ້ ໄຂແຕ່ບໍ່ຂາດຕົວ ມີ 18 ກໍລະນີ ແລະ ບໍ່ໄດ້ຮັບການປັບປຸງແກ້ໄຂ ທັງໝົດມີ 2 ກໍລະນີ, ໃນນັ້ນ: ກໍລະນີທີ່ຍົກມາແຕ່ສົກປີ 2015-2016 ທີ່ຈະຕ້ອງສືບຕໍ່ແກ້ໄຂ ມີ 4 ກໍລະນີ, ປີ 2018 ມີ 1 ກໍລະນີ, ປີ 2019 ມີ 1 ກໍລະນີ ປີ 2020 ຈໍານວນ 1 ກໍລະນີ, ປີ 2021 ມີ 5 ກໍລະນີ, ປີ 2023 ມີ 8 ກໍລະນີ;

8. ຕິດຕາມການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ທັງໝົດ 7 ເປົ້າໝາຍ ມູນຄ່າ 121,484,995,580 ກີບ ແລະ 249,966,220 ບາດ, ເກັບກູ້ຄືນໄດ້ 614,837,000 ກີບ, ຍັງຄ້າງ ຈໍານວນ 120,870,158,580 ກີບ ແລະ 249,966,220 ບາດ;
9. ດໍາເນີນການກວດກາ, ສະກັດກັ້ນການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນ ເປົ້າໝາຍທີ່ມີພຶດຕິກໍາເປັນການສໍ້ລາດບັງຫຼວງ ຊຶ່ງພົບເຫັນກໍລະນີລະເມີດ ຈໍານວນ 6 ກໍລະນີ, ມູນຄ່າເສຍຫາຍທັງໝົດເປັນເງິນກີບ ຈໍານວນ 135,425,263,477 ກີບ, ເປັນເງິນບາດ ຈໍານວນ 258,762,000 ບາດ, ສາມາດເກັບກູ້ຄືນໄດ້ທັງໝົດເປັນເງິນກີບ 18,620,007,897 ກີບ, ເປັນເງິນບາດ 8,305,780 ບາດ ແລະ ຍັງຄ້າງເປັນເງິນກີບຈໍານວນ 117,051,063,580 ກີບ, ເປັນເງິນເງິນບາດ ຈໍານວນ 250,456,220 ບາດ;
10. ໃນໄລຍະຜ່ານມາ ອົງການກວດກາລັດແຂວງ ໄດ້ຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີ ທັງໝົດຈໍານວນ 116 ສະບັບ, ໃນນີ້: ຂັ້ນແຂວງ 49 ສະບັບ ແລະ ຂັ້ນເມືອງ 67 ສະບັບ.

ມາດຕາ 2 **ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວອົງການ ກວດກາລັດແຂວງ ປະຈໍາປີ 2026**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີຮັບຮອງ ເອົາທິດທາງແຜນການເຄື່ອນໄຫວອົງການ ປະຈໍາປີ 2026 ຕາມການສະເໜີຂອງອົງການກວດກາລັດແຂວງ ດັ່ງນີ້:

1. ສືບຕໍ່ສຸມໃສ່ຕິດຕາມ-ກວດກາການປະຕິບັດພາລະບົດ, ໜ້າທີ່ ແລະ ຂອບເຂດສິດຂອງອົງການປົກຄອງ ການປະຕິບັດມະຕິ, ຄໍາສັ່ງລະບຽບກົດໝາຍ, ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ການຄຸ້ມຄອງ, ໂຄງການກໍ່ສ້າງພື້ນຖານໂຄງລ່າງ ທີ່ສະພາອະນຸມັດທີ່ມາຈັດຕັ້ງຢູ່ແຂວງ ໄຊຍະບູລີ ແລະ ບັນດາປະກົດການຫຍໍ້ທໍ້ເກີດຂຶ້ນໃນການຄຸ້ມຄອງບໍລິຫານລັດ;
2. ສືບຕໍ່ແກ້ໄຂຕາມຜົນການກວດສອບ ກໍລະນີທີ່ແກ່ຍາວມາຫຼາຍປີ ແລະ ກໍລະນີ ເກີດຂຶ້ນໃໝ່ທັງໝົດ 30 ກໍລະນີຄື:
   2.1 ກໍລະນີທີ່ແກ່ຍາວມາຫຼາຍປີມີທັງໝົດ 20 ກໍລະນີ, ໃນນີ້: ກໍລະນີທີ່ໄດ້ຮັບການແກ້ໄຂແຕ່ບໍ່ຂາດຕົວມີ 18 ກໍລະນີ, ຍັງບໍ່ໄດ້ຮັບການແກ້ໄຂມີ 2 ກໍລະນີ;
   2.2 ກໍລະນີເກີດຂຶ້ນໃໝ່ ປີ 2024 ມີ 10 ກໍລະນີຄື: (1) ການຄຸ້ມຄອງລາຍຮັບວິຊາການ(ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມ), (2) ຍອດເຫຼືອທ້າຍງົບປະມານ (ຂະແໜງງົບປະມານ), (3) ການຄຸ້ມຄອງລາຍຮັບ-ລາຍຈ່າຍ ເງິນບ້ວງຄ່າປັບໃໝຄະດີຢາເສບຕິດ(ພະແນກຍຸຕິທໍາ) (4) ການສະຫຼຸບຕິດຕາມໜີ້ຕ້ອງຮັບຄ່າປັບໃໝຕາມຄໍາຕັດສິນຂອງສານ (ພະແນກຍຸຕິທໍາ), (5) ການຄຸ້ມຄອງໂຄງການຊ່ວຍເຫຼືອລ້າ(ພະແນກສຶກສາທິການ ແລະ ກິລາ), (6) ການຄຸ້ມຄອງລາຍຮັບຄ່າທໍານຽມ ຈາກການຫັນທີ່ດິນປ່າໄມ້ເປັນດິນປະເພດອື່ນ(ພະແນກກະສິກໍາ ແລະ ສິ່ງແວດລ້ອມ), (7) ລາຍຮັບຈາກພັນທະຜູ້ລົງທຶນ(ພະແນກການເງິນ), (8) ການອ່ວຍທຶນໂຄງການລົງທຶນຂອງລັດ(ພະແນກການເງິນ), (9) ການມອບພັນທະການໂອນຫຸ້ນກິດຈະການເຂື່ອນນໍ້າຮຸ່ງ 1 (ສ່ວຍສາອາກອນປະຈໍາແຂວງ), (10) ການຄຸ້ມຄອງການແກ້ໄຂຄະດີທາງພາສີ (ພາສີປະຈໍາແຂວງ).

3. ສືບຕໍ່ຕິດຕາມ, ຊຸກຍູ້ ການແກ້ໄຂຜົນການກວດສອບ ແລະ ລົງເລິກກວດກາບາງກໍລະນີທີ່ມີການລະເມີດວິໄນແຜນການ-ການເງິນ ຕາມການສະເໜີຂໍ້ມູນຂອງອົງການກວດສອບປະຈຳພາກເໜືອ 1 ແລະ ຕາມມະຕິຂອງສະພາປະຊາຊົນແຂວງ;
4. ສືບຕໍ່ຮັບຄຳຮ້ອງ-ຄຳສະເໜີ, ໃຫ້ຄຳແນະນຳ, ໃຫ້ຄຳປຶກສາຕໍ່ບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າມາສະເໜີໃໝ່.

**ມາດຕາ 3 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານກວດກາລັດແຂວງ ປະຈຳປີ 2026**

ກອງປະຊຸມເຫັນດີຮັບເອົາ 5 ວິທີການຈັດຕັ້ງປະຕິບັດ ຂອງອົງການກວດກາລັດແຂວງ. ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານກວດກາລັດແຂວງ ປະຈຳປີ 2026 ໃຫ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍ ກອງປະຊຸມສະພາປະຊາຊົນແຂວງ ສະເໜີບາງມາດຕະການເພີ່ມເຕີມດັ່ງນີ້:

1. ສືບຕໍ່ຜັນຂະຫຍາຍບາງມາດຕາຂອງກົດໝາຍ ເປັນນິຕິກຳໃຕ້ກົດໝາຍໃຫ້ສຳເລັດຕາມແຜນເອົາໃຈໃສ່ເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ໃຫ້ແກ່ເປົ້າ ໝາຍຖືກກວດກາ, ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານກວດກາລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
2. ສືບຕໍ່ປັບປຸງແກ້ໄຂວຽກງານກວດກາໃຫ້ດີຂຶ້ນ ດ້ວຍການຖອດຖອນບົດຮຽນເສີມຂະຫຍາຍຈຸດດີແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ ໂດຍສະເພາະການຕິດຕາມຊຸກຍູ້ແກ້ໄຂຜົນການກວດກາ ແລະ ການເກັບກູ້ຄືນລາຍຮັບກວດກາເຫັນ ທີ່ຍັງຄົງຄ້າງໃນໄລຍະຜ່ານມາໃຫ້ມີຜົນສຳເລັດ;
3. ເອົາໃຈໃສ່ກໍ່ສ້າງພະນັກງານ-ນັກກວດກາ ໃຫ້ເປັນມືອາຊີບ, ຍົກສູງຄຸນທາດການເມືອງ, ຈັນຍາບັນຈັນຍາທຳ ເພື່ອຮັບປະກັນຄຸນນະພາບ ແລະ ສ້າງຄວາມເຊື່ອໝັ້ນໃຫ້ວຽກງານກວດກາ;
4. ເອົາໃຈໃສ່ທັນເປັນທັນສະໄໝ ວຽກງານກວດກາໂດຍນຳໃຊ້ເຕັກໂນໂລຊີ, ອຸປະກອນ, ເຄື່ອງມືເຂົ້າໃນວຽກງານກວດກາໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນສູງຂຶ້ນ;
5. ສະເໜີໃຫ້ອົງການປົກຄອງແຂວງ ຄົ້ນຄວ້າງົບປະມານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ຈຳເປັນ ຮັບໃຊ້ການເຄື່ອນໄຫວວຽກງານ ຂອງອົງການກວດກາລັດແຂວງ ຕາມການສະເໜີຂອງອົງການກວດກາລັດແຂວງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການອ້ອມຂ້າງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການກວດກາລັດແຂວງ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມາການເສດຖະກິດ, ແຜນການ ແລະ ການເງິນບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 97/ສພຂ.ຊຍ
ໄຊຍະບູລີ, ວັນທີ 30/12/2025

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ
## ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025), ການເຄື່ອນໄຫວວຽກງານ ປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງສານປະຊາຊົນແຂວງ

- ອີງຕາມ ມາດຕາ 12 ຂໍ້ 1.4 ແລະ ມາດຕາ 57 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານ ຂອງສານປະຊົນແຂວງ ສະບັບເລກທີ 616/ສປຊ.ຊຍ, ລົງວັນທີ 25 ທັນວາ 2025.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຂອງສະມາຊິກສະພາປະຊາຊົນແຂວງ ຢ່າງເລິກເຊິ່ງ, ຖີ່ຖ້ວນຕໍ່ບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025) ການເຄື່ອນໄຫວວຽກງານ ປີ 2025 ແລະ ທິດທາງແຜນການ 5 ປີ (2026-2030), ທິດທາງວຽກຈຸດສຸມປີ 2026 ຂອງສານປະຊາຊົນແຂວງ ໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ວັນທີ 30 ທັນວາ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ການເຄື່ອນໄຫວວຽກງານ ປີ 2025 ຂອງສານປະຊາຊົນແຂວງ**

**1. ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025)**

ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ຕໍ່ສານປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ສານປະຊາຊົນແຂວງ-ເຂດ ຈັດຕັ້ງປະຕິບັດມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 14/ສພຂ, ລົງວັນທີ 14/5/2021 ດ້ວຍຄວາມຮັບຜິດຊອບສູງ ເຊິ່ງໄດ້ຕັ້ງໜ້າປະຕິບັດ 4 ແຜນງານ 13 ໂຄງການ 30 ກິດຈະກຳມີຜົນສຳເລັດຫຼາຍດ້ານ; ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານ, ປັບປຸງແບບແຜນວິທີເຮັດວຽກ, ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກເຮັດໃຫ້ການເຄື່ອນໄຫວວຽກງານມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ໄດ້ເອົາໃຈໃສ່ຕັດສິນ ແລະ ພິພາກສາຄະດີດ້ວຍຄວາມຮັບຜິດຊອບສູງ; ໄດ້ປັບປຸງຕໍ່ເຕີມຫ້ອງເຮັດວຽກຂອງພະນັກງານສານ, ຫ້ອງຮອງຮັບປະຊາຊົນທີ່ມາພົວພັນວຽກ; ບຸກຄະລາກອນຂອງສານປະຊາຊົນແຂວງ-ເຂດ ໄດ້ຮັບການພັດທະນາໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ໄດ້ຮັບການແຕ່ງຕັ້ງປະທານສານປະຊາຊົນແຂວງ, ຮອງປະທານສານປະຊາຊົນແຂວງ, ປະທານສານປະຊາຊົນ ເຂດ 1, ຮອງປະທານສານປະຊາຊົນ ເຂດ 1, ຮອງປະທານສານປະຊາຊົນ ເຂດ 2, ຮອງປະທານສານປະຊາຊົນ ເຂດ 3 ຈຳນວນ 09 ທ່ານ, ຍິງ 02 ທ່ານ, ຮັບການແຕ່ງຕັ້ງຜູ້ພິພາກສາຂັ້ນໜຶ່ງ ຈຳນວນ 09 ທ່ານ, ເລື່ອນຜູ້ພິພາກສາຂັ້ນໜຶ່ງ ຂຶ້ນຂັ້ນສອງ ຈຳນວນ 06 ທ່ານ, ເລື່ອນຜູ້ພິພາກສາຂັ້ນສອງ ຂຶ້ນຂັ້ນສາມ ຈຳນວນ 03 ທ່ານ ລວມ 5 ປີ ໄດ້ຈຳນວນ 18 ທ່ານ; ປັດຈຸບັນມີຜູ້ພິພາກສາທັງໝົດໃນທົ່ວແຂວງ 35 ທ່ານ. ໃນ 5 ປີ ຜ່ານມາຢູ່ສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ມີຄະດີຄ້າງມາ ທັງໝົດ 48 ເລື່ອງ, ໃນນີ້ຂັ້ນອຸທອນ 06 ເລື່ອງ, ເຂົ້າໃໝ່ 2.464 ເລື່ອງ, ໃນນີ້ຂັ້ນອຸທອນ 35 ເລື່ອງ, ລວມຄະດີທັງໝົດ 2.512 ເລື່ອງ, ໃນນີ້ຂັ້ນອຸທອນ 41 ເລື່ອງ, ແກ້ໄຂແລ້ວ 2.438 ເລື່ອງ, ໃນນີ້ອຸທອນ 35 ເລື່ອງ, ເທົ່າກັບ 97.05% (ລື່ນແຜນການທີ່ວາງໄວ້ 12,05%) ຄະດີ

ຄ້າງມາພວມສືບຕໍ່ 74 ເລື່ອງ, ໃນນີ້ອຸທອນ 06 ເລື່ອງ, ເທົ່າກັບ 2,95% ໄດ້ນໍາໃຊ້ຜູ້ພິພາກສາຜູ້ດຽວຂຶ້ນນັ່ງຕັດສິນຄະດີ ຈໍານວນ 135 ເລື່ອງ.

**2. ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈໍາປີ 2025**

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ສານປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານ, ປັບປຸງແບບແຜນວິທີເຮັດວຽກ, ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກເຮັດໃຫ້ການເຄື່ອນໄຫວວຽກງານມີຜົນສໍາເລັດຫຼາຍດ້ານ ເປັນຕົ້ນ: ໄດ້ເອົາໃຈໃສ່ຕັດສິນ ແລະ ພິພາກສາຄະດີດ້ວຍຄວາມຮັບຜິດຊອບສູງ, ບຸກຄະລາກອນຂອງສານປະຊາຊົນແຂວງ-ເຂດ, ໄດ້ຮັບການພັດທະນາໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ໄດ້ຮັບການແຕ່ງຕັ້ງປະທານສານແຂວງ ຈໍານວນ 01 ທ່ານ, ຮອງປະທານສານປະຊາຊົນແຂວງ ຈໍານວນ 01 ທ່ານ, ຍິງ 01 ທ່ານ, ໄດ້ຮັບການແຕ່ງຕັ້ງ ຮອງປະທານສານປະຊາຊົນ ເຂດ 1 ຈໍານວນ 02 ທ່ານ, ຍິງ 01 ທ່ານ, ໄດ້ຮັບການແຕ່ງຕັ້ງຫົວໜ້າຄະນະສານ, ຮອງຫົວໜ້າຄະນະສານ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ສານປະຊາຊົນແຂວງ ແລະ ຫົວໜ້າຄະນະສານ, ຮອງຫົວໜ້າຄະນະສານ, ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າໜ່ວຍງານຈັດຕັ້ງ-ກວດກາ ສານປະຊາຊົນເຂດ ຈໍານວນ 14 ທ່ານ, ຍິງ 08 ທ່ານ, ໄດ້ຮັບການເລື່ອນຜູ້ພິພາກສາ ຂັ້ນ II ຂຶ້ນເປັນຜູ້ພິພາກສາ ຂັ້ນ III ແລະ ໄດ້ຮັບການເລື່ອນຜູ້ພິພາກສາ ຂັ້ນ I ຂຶ້ນເປັນຜູ້ພິພາກສາ ຂັ້ນ II ຈໍານວນ 09 ທ່ານ, ຍິງ 02 ທ່ານ, ຮັບການແຕ່ງຕັ້ງຜູ້ຊ່ວຍຜູ້ພິພາກສາ ສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ຈໍານວນ 04 ທ່ານ, ຍິງ 02 ທ່ານ, ເຊິ່ງສະແດງອອກ ໃນ 1 ປີຜ່ານມາ ຢູ່ສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ມີຄະດີຄ້າງມາທັງໝົດ 88 ເລື່ອງ, ເຂົ້າໃໝ່ 520 ເລື່ອງ, ລວມຄະດີທັງໝົດ 608 ເລື່ອງ, ສາມາດແກ້ໄຂໄດ້ 546 ເລື່ອງ, ເທົ່າກັບ 91,70% (ລື່ນແຜນການທີ່ວາງໄວ້ 6,70%) ຄະດີຍັງຄ້າງ 58 ເລື່ອງ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 99 ເລື່ອງ, ເທົ່າກັບ 16,28%.

ຄຽງຄູ່ກັບດ້ານດີ ແລະ ຜົນສໍາເລັດດັ່ງກ່າວ ກອງປະຊຸມເຫັນວ່າ ການຈັດຕັ້ງປະຕິບັດແຜນການ 5 ປີຜ່ານມາ ແລະ ວຽກງານ ປະຈໍາປີ 2025 ຂອງສານປະຊາຊົນແຂວງ ຍັງມີບາງວຽກງານຈໍານວນໜຶ່ງທີ່ຈະຕ້ອງໄດ້ປັບປຸງແກ້ໄຂ ເປັນຕົ້ນ: ການສຶກສາອົບຮົມການເມືອງ-ນໍາພາແນວຄິດ ຕໍ່ພະນັກງານຂອງສານປະຊາຊົນແຂວງ-ເຂດ ຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ, ການບໍາລຸງສ້າງຍົກລະດັບຄວາມຮູ້ທາງດ້ານທິດສະດີການເມືອງ ແລະ ວິຊາສະເພາະໃຫ້ບາງເປົ້າໝາຍຍັງບໍ່ທັນແທດເຖິງ, ການພິຈາລະນາຄະດີທີ່ເຂົ້າມາສານ ຈໍານວນໜຶ່ງຍັງຊັກຊ້າ, ບໍ່ຖືກຕ້ອງຕາມກໍານົດເວລາ ທີ່ກົດໝາຍກໍານົດໄວ້, ການເກັບກໍາຂໍ້ມູນ, ການຊັ່ງຊາ, ຕີລາຄາ, ວິໄຈຂໍ້ມູນຫຼັກຖານຍັງບໍ່ທັນຮອບດ້ານ, ຄົບຖ້ວນ, ຍັງບໍ່ຮັບປະກັນໃຫ້ຄູ່ຄວາມ, ບຸກຄົນທີສາມໄດ້ໂຕ້ແຍ່ງ-ໂຕ້ຖຽງກັນເທົ່າທີ່ຄວນ; ການຕິດຕາມກວດກາ, ຊຸກຍູ້ການພິຈາລະນາຄະດີຂອງສານປະຊາຊົນເຂດ ຍັງບໍ່ທັນປົກກະຕິຕໍ່ເນື່ອງ ເຮັດໃຫ້ການພິຈາລະນາຄະດີບາງເລື່ອງຢູ່ສານປະຊາຊົນເຂດມີການຂໍອຸທອນ, ສານຂັ້ນອຸທອນໄດ້ພິພາກສາລົບລ້າງທັງໝົດ ຫຼື ບາງສ່ວນ ກໍຍັງມີ.

## ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2026

ກອງປະຊຸມເຫັນດີ ຕໍ່ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2026 ແລະ ມາດຕະການຈັດຕັ້ງປະຕິບັດຂອງສານປະຊາຊົນແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຜົນສໍາເລັດ ແຕ່ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງດ້ານເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທໍາ, ເອົາໃຈໃສ່ປັບປຸງ ແລະ ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຄວາມຮູ້, ຄວາມສາມາດແບບມືອາຊີບຂອງຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນແຂວງ-ເຂດ ທັງ 3 ເຂດ ເຮັດໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານມີນໍ້າໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ ການແກ້ໄຂ້ຄະດີໃຫ້ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ມີປະສິດທິຜົນ ເພື່ອເຮັດໃຫ້ຂົງເຂດສານປະຊາຊົນ ມີຄວາມໂປ່ງໃສ ປະກອບສ່ວນຕ້ານໄດ້ການສໍ້ລາດບັງຫຼວງ ເທື່ອລະກ້າວ;

2. ຍົກສູງຄຸນພາບຂອງການດຳເນີນຄະດີຢູ່ສານຂັ້ນຕົ້ນ ໃຫ້ບັນລຸ 85% ຂຶ້ນໄປ ຂອງຄະດີທັງໝົດ ທີ່ເຂົ້າມາສານ ອັດຕາການຂໍອຸທອນບໍ່ໃຫ້ເກີນ 15% ແລະ ອັດຕາການຂໍລົບລ້າງໃຫ້ໜ້ອຍລົງ ຂອງຄະດີທີ່ເຂົ້າມາສານໂດຍທຽບໃສ່ປີຜ່ານມາ;

3. ເອົາໃຈໃສ່ຕິດຕາມກວດກາ ແລະ ປະເມີນ ຜູ້ພິພາກສາດີ-ເກັ່ງ ເລືອກເຟັ້ນຜູ້ພິພາກສາດີ-ເກັ່ງ ໃຫ້ບັນລຸ 30% ຂຶ້ນໄປ ຂອງຜູ້ພິພາກສາທັງໝົດທີ່ໄດ້ຮັບການປະເມີນ ເພື່ອຮັບປະກັນໃຫ້ແກ່ການດຳເນີນຄະດີໃຫ້ມີຄຸນນະພາບ;

4. ເພີ່ມທະວີການປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງກັບການດຳເນີນຄະດີໃຫ້ມີຄວາມຄ່ອງຕົວ ແລະ ກົມກຽວ ເພື່ອຮັບປະກັນໃຫ້ດຳເນີນຄະດີຕາມຂະບວນຍຸຕິທຳມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງສານປະຊາຊົນແຂວງ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ 04 ມາດຕະການຈັດຕັ້ງປະຕິບັດ ທີ່ສານປະຊາຊົນແຂວງ ໄດ້ກຳນົດໄວ້ໃນບົດລາຍງານ ແຕ່ກອງປະຊຸມສະເໜີບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກ-ຄະນະນຳໃນການຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ໃຫ້ເກີດເປັນຮູບປະທຳ ໂດຍການນຳໄປເຜີຍແຜ່ເຊື່ອມຊຶມໃຫ້ບັນດາຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນຢ່າງທົ່ວເຖິງ, ເລິກເຊິ່ງ ເພື່ອເຮັດໃຫ້ບັນດາຄາດໝາຍຕາມແຜນການທີ່ວາງໄວ້;

2. ສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ບັນດາຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຈັນຍາບັນ, ຈັນຍາທຳ, ມີນ້ຳໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ, ເຄົາລົບລະບຽບວິໄນຂອງການຈັດຕັ້ງ, ມີສະຕິເຄົາລົບປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ; ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະວິຊາການກົດໝາຍ, ທິດສະດີການເມືອງ, ພາສາຕ່າງປະເທດ ກໍຄືວິທີການດຳເນີນຄະດີຂອງສານ;

3. ເອົາໃຈໃສ່ປັບປຸງກົນໄກແບບແຜນວິທີເຮັດວຽກ ກໍຄືການດຳເນີນຄະດີໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງຮັບປະກັນໃຫ້ມີຄວາມຍຸຕິທຳໃນສັງຄົມ;

4. ເພີ່ມທະວີການຕິດຕາມກວດກາການດຳເນີນຄະດີຢູ່ສານປະຊາຊົນແຂວງ-ເຂດ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ເພື່ອເຮັດໃຫ້ການດຳເນີນຄະດີມີຄວາມຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ, ຫຼີກລ່ຽງການພິຈາລະນາຄະດີຫຼີ້ນໄປຫຼີ້ນມາຫຼາຍເທື່ອ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ສານປະຊາຊົນແຂວງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ ເລກທີ..98../ສພຂ.ຊຍ

ໄຊຍະບູລີ, ວັນທີ..30./...12.../2025

## ມະຕິ

## ຂອງກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ວ່າດ້ວຍການຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ 5 ປີ (2021-2025), ການເຄື່ອນໄຫວວຽກງານ ປີ 2025 ແລະ ທິດທາງແຜນການ ປີ 2026 ຂອງອົງການໄອຍະການປະຊາຊົນແຂວງ

- ອີງຕາມ ມາດຕາ 12 ຂໍ້ 1.4 ແລະ ມາດຕາ 57 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ສະບັບເລກທີ 02/ອຍກ.ຊຍ, ລົງວັນທີ 11 ພະຈິກ 2025.

ຜ່ານການຄົ້ນຄວ້າພິຈາລະນາ ແລະ ປະກອບຄຳເຫັນ ຂອງສະມາຊິກສະພາປະຊາຊົນແຂວງ ຢ່າງເລິກເຊິ່ງ, ຖີ່ຖ້ວນ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025), ການເຄື່ອນໄຫວວຽກງານ ປີ 2025 ແລະ ທິດທາງແຜນການ 5 ປີ (2026-2030), ທິດທາງແຜນວຽກງານຈຸດສຸມປີ 2026 ຂອງ ອົງການໄອຍະການປະຊາຊົນແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ວັນທີ 30 ທັນວາ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ການໄຫວວຽກງານ ປີ 2025 ຂອງອົງການໄອຍະການປະຊາຊົນແຂວງ**

**1. ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025)**

ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ຕໍ່ອົງການໄອຍະການປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ ນຳພາ-ຊີ້ນຳ ອົງການໄອຍະການປະຊາຊົນແຂວງ-ເຂດ ຈັດຕັ້ງປະຕິບັດມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 14/ສພຂ, ລົງວັນທີ 14/5/2021 ດ້ວຍຄວາມຮັບຜິດຊອບສູງ ເຊິ່ງໄດ້ຕັ້ງໜ້າປະຕິບັດ 5 ແຜນງານ, 17 ໂຄງການ ມີຜົນສຳເລັດຫຼາຍດ້ານ, ລະບົບການຈັດຕັ້ງຂອງອົງການໄອຍະການແຂວງ ແລະ ອົງການໄອຍະການປະຊາຊົນເຂດ ໄດ້ຮັບການປັບປຸງ ໄດ້ສ້າງຕັ້ງຫ້ອງການອົງການໄອຍະການປະຊາຊົນເຂດ ປະຈຳເມືອງໄດ້ 02 ເມືອງ, ບຸກຄະລາກອນໄດ້ຮັບການບຳລຸງສ້າງ ແລະ ພັດທະນາມີຄວາມຮູ້ຄວາມສາມາດ ໄດ້ຫັນເອົາພະນັກງານເຂດທີ່ປະຈຳຢູ່ເມືອງກັບມາປະຈຳຢູ່ຫ້ອງການອົງການໄອຍະການເຂດ, ໄດ້ຮັບການແຕ່ງຕັ້ງເລື່ອນຈາກພະນັກງານວິຊາການຂຶ້ນເປັນຜູ້ຊ່ວຍພະນັກງານ ຈຳນວນ 18 ທ່ານ, ພະນັກງານໄອຍະການ ຂັ້ນ 3 ຈຳນວນ 8 ທ່ານ, ພະນັກງານໄອຍະການ ຂັ້ນ 2 ຈຳນວນ 01 ທ່ານ, ພະນັກງານໄອຍະການ ຂັ້ນ 1 ຈຳນວນ 01 ທ່ານ, ຕິດຕາມກວດກາ ການປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານມີຄຸນນະພາບສູງຂຶ້ນ. ໃນ 5 ປີ ຜ່ານມາອົງການໄອຍະການປະຊາຊົນສາມາດແກ້ໄຂຄະດີອາຍາ ໄດ້ທັງໝົດ 2,583 ເລື່ອງ, ເທົ່າກັບ 98,92%, ເຂົ້າຮ່ວມຖະແຫຼງໃນທີ່ປະຊຸມສານໄດ້ 2.270 ເລື່ອງ, ສານຕັດສິນເອົາຕາມຄຳຖະແຫຼງທຸກເລື່ອງ ບົນລຸຕາມຄາດໝາຍ

ທີ່ວາງໄວ້; ຄະດີແພ່ງແກ້ໄຂ 280 ເລື່ອງ, ເທົ່າກັບ 99,29%, ຖະແຫຼງຄະດີແພ່ງໃນທີ່ປະຊຸມສານ 133 ເລື່ອງ, ສານຕັດສິນເອົາຕາມການຖະແຫຼງທຸກເລື່ອງ; ໄດ້ສ້າງບົດບັນທຶກກົນໄກປະສານງານຮ່ວມ ກັບ ພະແນກການທີ່ກ່ຽວຂ້ອງ ຈຳນວນ 05 ສະບັບ, ພັດທະນາພື້ນຖານໂຄງລ່າງ ດຳເນີນການກໍ່ສ້າງ ຫ້ອງການອົງການໄອຍະການປະຊາຊົນແຂວງ ເຊິ່ງເປັນການປະກອບສ່ວນເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍມີຄວາມໜັກແໜ້ນ ແລະ ເຂັ້ມແຂງເທື່ອລະກ້າວ.

**2. ຮັບຮອງເອົາການເຄື່ອນໄຫວວຽກງານ ປະຈຳປີ 2025**

ກອງປະຊຸມຕີລາຄາສູງ ຕໍ່ອົງການໄອຍະການປະຊາຊົນແຂວງ ທີ່ໄດ້ສຸມໃສ່ປະຕິບັດວຽກງານ ປະຈຳປີ 2025 ຕາມມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 157/ສພຂ, ລົງວັນທີ 30 ທັນວາ 2024, ອົງການໄອຍະການປະຊາຊົນແຂວງ ໄດ້ນຳພາຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ໄດ້ຮັບການແຕ່ງຕັ້ງຫົວໜ້າອົງການໄອຍະການປະຊາຊົນແຂວງ ຜູ້ໃໝ່, ພະນັກງານ-ລັດຖະກອນໄດ້ຮັບການຍົກລະດັບດ້ານທິດສະດີ-ການເມືອງ, ວິຊາສະເພາະ, ເຂົ້າຝຶກອົບຮົມວິຊາສະເພາະ 11 ທ່ານ, ເຂົ້າຮຽນທິດສະດີການເມືອງ-ການປົກຄອງ ຊັ້ນກາງ 04 ທ່ານ, ຊັ້ນຕົ້ນ 06 ທ່ານ, ເຮັດໃຫ້ກົງຈັກການຈັດຕັ້ງມີຄວາມໜັກແໜ້ນ ແລະ ເຂັ້ມແຂງ; ການປະຕິບັດພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ມີຄຸນນະພາບສູງຂຶ້ນຕື່ມບາດກ້າວໜຶ່ງ ການແກ້ໄຂຄະດີອາຍາ ຂັ້ນຕົ້ນສາມາດບັນລຸ 93 %, ຄະດີອາຍາຂັ້ນອຸທອນບັນລຸ 100%, ຄະດີແພ່ງຂັ້ນຕົ້ນບັນລຸ 95%, ສານຂັ້ນຕົ້ນຕັດສິນເອົາຕາມການຖະແຫຼງທຸກເລື່ອງ, ຄະດີແພ່ງຂັ້ນອຸທອນ 100%, ການເຂົ້າຮ່ວມຖະແຫຼງຄະດີອາຍາ, ຄະດີແພ່ງໃນທີ່ປະຊຸມສານທັງຂັ້ນຕົ້ນ ແລະ ຂັ້ນອຸທອນ ສານປະຊາຊົນແມ່ນເອົາຕາມການຖະແຫຼງຂອງໄອຍະການທຸກເລື່ອງ; ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ໂດຍສະເພາະ ໄດ້ຮັບການອະນຸມັດໂຄງການກໍ່ສ້າງຫ້ອງການອົງການໄອຍະການປະຊາຊົນແຂວງ ຫຼັງໃໝ່ ພ້ອມທັງວັດຖຸອຸປະກອນ, ພາຫະນະຮັບໃຊ້ ກໍໄດ້ຮັບການພັດທະນາ.

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດດັ່ງກ່າວ ກອງປະຊຸມເຫັນວ່າ ການຈັດຕັ້ງປະຕິບັດແຜນການ 5 ປີຜ່ານມາ ແລະ ວຽກງານ ປະຈຳປີ 2025 ຂອງອົງການໄອຍະການປະຊາຊົນແຂວງ ມີບາງດ້ານຕ້ອງສືບຕໍ່ເອົາໃຈໃສ່ແກ້ໄຂ ດັ່ງນີ້:

1. ສຶກສາອົບຮົມການເມືອງ-ແນວຄິດ ຕໍ່ພະນັກງານ ຂອງອົງການໄອຍະການປະຊາຊົນແຂວງ-ເຂດ ຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ; ການບຳລຸງສ້າງ, ຍົກລະດັບຄວາມຮູ້ ທາງດ້ານທິດສະດີການເມືອງ ແລະ ວິຊາສະເພາະ ໃຫ້ພະນັກງານບາງເປົ້າໝາຍ ຍັງບໍ່ທັນແທດເຖິງ ເຮັດໃຫ້ພະນັກງານໄອຍະການຈຳນວນໜຶ່ງ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ ແລະ ຈັນຍາທຳບໍ່ໜັກແໜ້ນ, ອຸດົມການໃນການປົກປ້ອງກົດໝາຍ, ຄວາມຮັບຜິດຊອບຕໍ່ໜ້າວຽກ ແລະ ຮັບໃຊ້ປະຊາຊົນບໍ່ສູງເທົ່າທີ່ຄວນ;

2. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ບາງກໍລະນີບໍ່ທັນຮັບປະກັນຄຸນນະພາບ, ສ່ວນຫຼາຍຍັງຖືເອົາແຕ່ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຕາມບົດສະຫຼຸບຜົນການສືບສວນ-ສອບສວນຂອງເຈົ້າໜ້າທີ່, ການຄົ້ນຄວ້າແກ້ໄຂຄະດີບໍ່ພາວະວິໄສ ເຮັດໃຫ້ສານມີປະເດັນສົ່ງໃຫ້ເກັບກຳຂໍ້ມູນຫຼັກຖານເພີ່ມເຕີມ ເປັນສາເຫດໃຫ້ການດຳເນີນຄະດີ ຫຼົບໄປຫຼົບມາຫຼາຍຄັ້ງ ຊັກຊ້າແກ່ຍາວເວລາ;

3. ການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນຕໍ່ການດຳເນີນຄະດີ ຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນ ຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດ ເມື່ອພົບເຫັນການລະເມີດກົດໝາຍ, ໃນການກັກຕົວຈັບຕົວ ແລະ ການດຳເນີນຄະດີ ບໍ່ຖືກຕ້ອງຕາມຂັ້ນຕອນກົດໝາຍ ອົງການໄອຍະການປະຊາຊົນຍັງບໍ່ທັນເປັນເຈົ້າການ ຫຼື ມີມາດຕະການ ເພື່ອສະເໜີໃຫ້ອົງການກ່ຽວຂ້ອງແກ້ໄຂຢ່າງເດັດຂາດ ແລະ ທັນການ;

4. ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ຍັງບໍ່ທັນໄດ້ລົງເລິກກວດກາຄວາມຖືກຕ້ອງຕາມຂັ້ນຕອນກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ເມື່ອກວດກາເຫັນການລະເມີດກົດໝາຍໃນການປະຕິບັດຄຳຕັດສິນຂອງສານຈຳນວນໜຶ່ງ ກໍຍັງບໍ່ທັນເປັນເຈົ້າການສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍ;

5. ການປະສານງານ ກັບ ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ 4 ພາກສ່ວນ ດຳເນີນຄະດີຕາມຂະບວນການຍຸຕິທຳ ບໍ່ທັນຄ່ອງຕົວ ແລະ ກົມກຽວ ເຖິງວ່າໄດ້ມີບົດບັນທຶກຮ່ວມກັນ ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນເຂັ້ມງວດ ແລະ ເອກະພາບກັນເທົ່າທີ່ຄວນ.

## ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026

ກອງປະຊຸມ ເຫັນດີຕໍ່ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ແລະ ມາດຕະການຈັດຕັ້ງປະຕິບັດ ຂອງອົງການໄອຍະການປະຊາຊົນແຂວງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີຜົນສຳເລັດ ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງດ້ານເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທຳ ໃຫ້ແກ່ພະນັກງານ-ລັດຖະກອນ ຂອງອົງການໄອຍະການປະຊາຊົນແຂວງ-ເຂດ ຕິດພັນກັບການບຳລຸງ, ຍົກລະດັບທາງດ້ານທິດສະດີ, ວິຊາສະເພາະ; ການຕິດຕາມກວດກາການປະຕິບັດກົດໝາຍ ແລະ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃຫ້ມີປະສິດທິພາບທີ່ສູງຂຶ້ນ;

2. ສືບຕໍ່ປັບປຸງການຈັດຕັ້ງ ຂອງອົງການໄອຍະການປະຊາຊົນແຂວງ-ເຂດ ໃຫ້ສອດຄ່ອງກັບກົງຈັກ ຂອງອົງການປົກຄອງທ້ອງຖິ່ນ, ແຜນກຳນົດຕຳແໜ່ງງານ, ການແຕ່ງຕັ້ງ, ການບັນຈຸຊັບຊ້ອນ ແລະ ສັບປ່ຽນບ່ອນປະຈຳການຂອງພະນັກງານ ຕ້ອງໃຫ້ສອດຄ່ອງກັບຄວາມຮູ້ຄວາມສາມາດ, ພ້ອມທັງສ້າງພະນັກງານໄອຍະການໃຫ້ກາຍເປັນຜູ້ຊຳນານງານ ແລະ ເປັນຜູ້ຊ່ຽວຊານ ໃນການດຳເນີນຄະດີ;

3. ສືບຕໍ່ຍົກສູງຄຸນນະພາບແກ້ໄຂຄະດີ, ຄຳຮ້ອງ ທີ່ເຂົ້າມາອົງການໄອຍະການປະຊາຊົນຂັ້ນແຂວງ ໃຫ້ບັນລຸ 95% ຂຶ້ນໄປ, ພ້ອມທັງເອົາໃຈໃສ່ ການສັ່ງຟ້ອງຜູ້ຖືກຫາຂຶ້ສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງຄວາມເປັນຈິງ ໃຫ້ຫຼາຍຂຶ້ນກວ່າເກົ່າ;

4. ເອົາໃຈໃສ່ຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ໃນການດຳເນີນຄະດີ ແລະ ການນຳໃຊ້ 7 ມາດຕະການສະກັດກັ້ນ ຕ້ອງຮັບປະກັນຖືກຕ້ອງຕາມກົດໝາຍ ພ້ອມນັ້ນກໍສຸມໃສ່ແກ້ໄຂບັນຫາກັກຂັງຜູ້ຖືກຫາ ແລະ ນັກໂທດ ເກີນກຳນົດເວລາ ຕາມກົດໝາຍ ແລະ ຄຳຕັດສິນຂອງສານ;

5. ເພີ່ມທະວີຕິດຕາມກວດກາ ແລະ ຊຸກຍູ້ອົງການປະຕິບັດຄຳຕັດສິນຂອງສານ, ໃນການນຳເອົາຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ວ່ອງໄວກວ່າເກົ່າ;

6. ສືບຕໍ່ຄົ້ນຄວ້າ, ປັບປຸງກົນໄກການປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ 4 ພາກສ່ວນດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ແໜ້ນແຟ້ນ, ກົມກຽວ; ຍົກສູງຄວາມຮັບຜິດຊອບການເມືອງແຕ່ລະພາກສ່ວນ ໃນການດຳເນີນຄະດີໃຫ້ຮັບປະກັນຄວາມຖືກຕ້ອງ ຕາມລັດຖະທຳມະນູນ ແລະ ກົດໝາຍ.

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ທິດທາງແຜນການ ປະຈຳປີ 2026 ມີຜົນສຳເລັດ ຕາມແຜນການທີ່ວາງໄວ້ ກອງປະຊຸມສະເໜີ ບາງມາດຕະການ ດັ່ງນີ້:

1. ຍົກສູງຄວາມຮັບຜິດຊອບການນຳພາ-ຊີ້ນຳ ອົງການໄອຍະການປະຊາຊົນແຂວງ-ເຂດ ຈັດຕັ້ງຜັນຂະ

ຫຍາຍ ທິດທາງແຜນການ ປະຈຳປີ 2026 ໃຫ້ເປັນແຜນການ ແລະ ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ;

2. ເພີ່ມທະວີຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດທິດທາງແຜນການ ປະຈຳປີ 2026 ເປັນແຕ່ລະໄລຍະ ເພື່ອເຮັດໃຫ້ບັນດາແຜນງານ, ໂຄງການ ມີຜົນສຳເລັດ ຕາມຄາດໝາຍທີ່ວາງໄວ້;

3. ໃຫ້ຄະນະກຳມະການປົກຄອງແຂວງ ຄົ້ນຄວ້າງົບປະມານ, ພາຫະນະ, ອຸປະກອນ ແລະ ພື້ນຖານໂຄງລ່າງທີ່ຈຳເປັນໃຫ້ອົງການໄອຍະການປະຊາຊົນແຂວງ-ເຂດ ເພື່ອປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງມີປະສິດທິຜົນ ຕາມກົດໝາຍກຳນົດໄວ້.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການໄອຍະການປະຊາຊົນແຂວງ ປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2. ມອບໃຫ້ຄະນະກຳມະການປົກຄອງແຂວງ ຊີ້ນຳບັນດາພະແນກການທີ່ກ່ຽວຂ້ອງ ປະຕິບັດມະຕິນີ້ຢ່າງເຂັ້ມງວດ;

3. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ ເລກທີ 99./ສພຂ.ຊຍ

ໄຊຍະບູລີ, ວັນທີ 30./12./2025.

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍ ການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ວຽກງານ 5 ປີ (2021-2025) ປະຈຳປີ 2025 ຂອງສະພາປະຊາຊຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມ ຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V

- ອີງຕາມ ມາດຕາ 57 ຂອງ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 57/ ສພຊ, ລົງວັນທີ 28 ມິຖຸນາ 2024.
- ອີງຕາມ ບົດລາຍງານການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ປະຈຳປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມ ຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V.

ຜ່ານການຮັບຟັງການລາຍງານ ຂອງ ຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກ 5 ປີ (2021-2025), ປະຈຳປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມ ຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V, ການປະກອບຄຳເຫັນຂອງສະມາຊິກສະພາປະຊາຊົນແຂວງ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ດັ່ງນີ້:**

**1. ດ້ານນິຕິກຳ**

ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍໃນກອງປະຊຸມສະພາແຫ່ງຊາດ ໄດ້ 95 ສະບັບ (ພິຈາລະນາ, ຮັບຮອງ ໄດ້ 87 ສະບັບ) **ໃນປີ 2025:** ໄດ້ 13 ສະບັບ ໃນນີ້ສ້າງໃໝ່ 5 ສະບັບ, ປັບປຸງ 8 ສະບັບ; ຈັດຕັ້ງການທາມທາບຮ່າງກົດໝາຍ ໄດ້ 63 ສະບັບ; ຈັດຕັ້ງໂຄສະນາເຜີຍແຜ່ກົດໝາຍ ຂົງເຂດສະພາ ໄດ້ 4 ສະບັບ; ພິຈາລະນາ ແລະ ຮັບຮອງ ນິຕິກຳໃຕ້ກົດໝາຍຂອງແຂວງ ໄດ້ 15 ສະບັບ ໃນນີ້ສ້າງໃໝ່ 12 ສະບັບ, ປະເມີນ 7 ສະບັບ, ປັບປຸງ 7 ສະບັບ **ສຳລັບປີ 2025** ຮັບຮອງເອົາການປະເມີນນິຕິກຳໃຕ້ກົດໝາຍຂອງແຂວງ 3 ສະບັບ; ສ້າງບົດບັນທຶກຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ຄະນະປະຈຳພັກແຂວງ ແລະ ຄະນະປະ

ຈຳແນວລາວສ້າງຊາດແຂວງ; ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ແລະ ບັນດາ ພະແນກການ, ອົງການ, ກົມກອງ ອ້ອມຂ້າງແຂວງ ໄດ້ 41 ສະບັບ; ສ້າງນິຕິກຳຮັບໃຊ້ສະເພາະ ວຽກງານສະພາປະຊາຊົນແຂວງ ໄດ້ 13 ສະບັບ.

**2. ການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ**

ດຳເນີນກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນ ໄດ້ 12 ຄັ້ງ ພິຈາລະນາຫົວຂໍ້ທັງໝົດ 81 ເນື້ອໃນ, ຮັບຮອງເປັນມະຕິ 72 ສະບັບ; ການດຳເນີນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ 53 ຄັ້ງ, ມີ 78 ເນື້ອໃນ, ພິຈາລະນາເປັນມະຕິ 75 ສະບັບ; ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງຍົກຍ້າຍບຸກຄະລາກອນຂອງແຂວງ ຕາມການສະເໜີຂອງເຈົ້າແຂວງ 66 ທ່ານ, ຍິງ 4 ທ່ານ; ຈັດຕັ້ງປະຕິບັດການປະເມີນ ແລະ ໃຫ້ຄະແນນ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນແຂວງ ຊຸດທີ IV ເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງ ຈຳນວນ 74 ທ່ານ, ຍິງ 11 ທ່ານ; ພິຈາລະນາ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ, ເລື່ອນຊັ້ນຜູ້ພິພາກສາ ຂອງສານປະຊາຊົນແຂວງ, ເຂດ ຕາມການສະເໜີຂອງສານປະຊາຊົນແຂວງ 37 ທ່ານ;

- **ສຳລັບປີ 2025**: ໄດ້ຄົ້ນຄວ້າ ພິຈາລະນາບັນຫາສຳຄັນຂອງແຂວງ 32 ເນື້ອໃນ ຮັບຮອງເປັນມະຕິ 26 ສະບັບ ແລະ ພິຈາລະນາຮັບຮອງເອົາ ປະທານຄະນະກຳມະການປົກຄອງແຂວງ, ຮອງປະທານຄະນະກຳມະການປົກຄອງແຂວງ, ກຳມະການ ຂອງຄະນະກຳມະການປົກຄອງແຂວງ ແລະ ປະທານອົງການກວດກາລັດແຂວງ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ-ເຂດ, ປະທານສານປະຊາຊົນແຂວງ-ເຂດ ທັງໝົດ 28 ທ່ານ, ຍິງ 3 ທ່ານ ແລະ ການສ້າງຕັ້ງຕາແສງ.

**3. ດ້ານການຕິດຕາມ ກວດກາ**

ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ໄດ້ 16 ສະບັບ; ໂຄສະນາເຜີຍແຜ່ກົດໝາຍຂົງເຂດສະພາ ໄດ້ 4 ສະບັບ; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ລັດຖະທຳມະນູນກົດໝາຍ, ນິຕິກຳໃຕ້ກົດໝາຍ, ຄຳສັ່ງ, ຄຳແນະນຳ, ມະຕິກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການແກ້ໄຂບັນຫາຢາເສບຕິດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໂຄງການລົງທຶນຂອງລັດ-ເອກະຊົນ, ການຄຸ້ມຄອງການຈັດເກັບລາຍຮັບຢູ່ບັນດາດ່ານສາກົນ, ການຍົກຍ້າຍຈັດສັນພູມລຳເນົາຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການ, ການນຳເຂົ້າ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ, ວຽກງານປັບປຸງຄຸນນະພາບການຮຽນ-ການສອນ, ການຄຸ້ມຄອງກິລາກາຍະກຳໃນໄລຍະໃໝ່; ການຄຸ້ມຄອງວຽກງານເຜົ່າ-ສາສະໜາ, ການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ, ການປະຕິບັດນະໂຍບາຍ ຢູ່ເຂດເລືອກຕັ້ງເມືອງ 11 ເມືອງ ແລະ ອ້ອມຂ້າງແຂວງ ໄດ້ທັງໝົດ 46 ຄັ້ງ ລວມມີ 32 ໂຄງການ; ໄດ້ຈັດຕັ້ງການແກ້ໄຂ ຄຳຮ້ອງຂໍຄວາມເປັນທຳ ມີ 59 ເລື່ອງ, ແກ້ໄຂສຳເລັດ ກວມເອົາ 100%; ໄດ້ຮັບຄຳສະເໜີ, ໂທລະສັບສາຍດ່ວນ ຂອງປະຊາຊົນ ທັງໝົດ 714 ເລື່ອງ ໃນນີ້ ຄຳສະເໜີ 497 ເລື່ອງ ແລະ ສາຍດ່ວນ 217 ເລື່ອງ, ແກ້ໄຂສຳເລັດ 100%;

- ປີ 2025: ຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ໂຄງການຕ້ານເຈື່ອນ, ການຂຸດຄົ້ນແຮ່ທາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມ

ສະຫງົບ, ການນຳເຂົ້າ-ສົ່ງອອກສິນຄ້າຢູ່ດ່ານສາກົນ, ການຈັດສັນພູມລຳເນົາທີ່ຢູ່ອາໃສຂອງປະຊາຊົນ ໄດ້ 3 ຄັ້ງ ໄດ້ 6 ເມືອງ ມີ 20 ຈຸດ, 11 ໂຄງການ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ 8 ເລື່ອງ, ແກ້ໄຂແລ້ວ 8 ເລື່ອງ ກວມເອົາ 100%; ໄດ້ຮັບຄຳສະເໜີ, ສາຍດ່ວນ ທັງໝົດ 79 ເລື່ອງ ແກ້ໄຂແລ້ວ 79 ເລື່ອງ.

**4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ**

ເຂົ້າຮ່ວມ ສຳມະນາຍົກລະດັບຂີດຄວາມສາມາດ, ຝຶກອົບຮົມໃນຫົວຂໍ້ຕ່າງໆ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຈັດຂຶ້ນໄດ້ທັງໝົດ 57 ຄັ້ງ, ມີ 58 ຫົວຂໍ້; ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານນຳພາຫຼັກແຫຼ່ງຂອງແຂວງ-ເມືອງ ແລະ ພະນັກງານຊ່ວຍວຽກ ໄດ້ 5 ຄັ້ງ ມີ 11 ຫົວຂໍ້; ພ້ອມດຽວກັນນີ້ ຍັງໄດ້ສ້າງເງື່ອນໄຂໃຫ້ພະນັກງານໄປຍົກລະດັບວິຊາສະເພາະ ພາຍໃນປະເທດ 3 ທ່ານ, ຕ່າງປະເທດ 2 ທ່ານ, ກົດໝາຍໄລຍະສັ້ນ 5 ທ່ານ, ທິດສະດີການເມືອງຂັ້ນກາງ 3 ທ່ານ, ຂັ້ນຕົ້ນ 3 ທ່ານ ແລະ ບຳລຸງພາສາຫວຽດນາມ ຢູ່ແຂວງເຊີນລາ ສສ ຫວຽດນາມ 17 ທ່ານ;

❖ **ປີ 2025** ເຂົ້າຮ່ວມຝຶກອົບຮົມສ້າງຄວາມເຂັ້ມແຂງຮ່ວມສະພາແຫ່ງຊາດ ແລະ ບັນດາກຳມາທິການທີ່ກ່ຽວຂ້ອງ ໄດ້ 9 ຄັ້ງມີ 9 ຫົວຂໍ້; ຍົກລະດັບວິຊາສະເພາະ ປະລິນຍາໂທ 3 ທ່ານ, ທິດສະດີການເມືອງ 2 ທ່ານ, ຍິງ 1 ທ່ານ, ກົດໝາຍໄລຍະສັ້ນ 2 ທ່ານ.

**5. ການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ**

ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໄດ້ເອົາໃຈໃສ່ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໄດ້ຮັບຜົນສຳເລັດຫຼາຍດ້ານເປັນຕົ້ນ: ວຽກງານສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ການໂຄສະນາເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ 46 ຄັ້ງ ປະກອບມີ ລັດຖະທຳມະນູນ, ກົດໝາຍ 45 ສະບັບ ແລະ ນິຕິກຳໃຕ້ກົດໝາຍ 15 ສະບັບ; ປີ 2025 ປະຕິບັດໄດ້ 7 ຄັ້ງ ມີກົດໝາຍ 13 ສະບັບ ແລະ ນິຕິກຳໃຕ້ກົດໝາຍຂອງແຂວງ 4 ສະບັບ; ລົງພົບປະຜູ້ມີສິດປ່ອນບັດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມ ຄັ້ງປະຖົມມະລືກ, ກອງປະຊຸມສະໄໝສາມັນ, ກອງປະຊຸມສະໄໝວິສາມັນ ຂອງສະພາປະຊາຊົນແຂວງ ຊຸດທີ IV ໄດ້ທັງໝົດ 1.416 ຈຸດ; ສຳນັກງານ 108 ຈຸດ, ກວມເອົາ 1.308 ເທື່ອບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 161.331 ເທື່ອຄົນ, ຍິງ 84.432 ເທື່ອຄົນ; ນອກນັ້ນ ຍັງໄດ້ປຸກລະດົມ ວັດຖຸປັດໃຈ ແລະ ເງິນສົດ ຈາກຫຼາຍພາກສ່ວນ ເພື່ອຊ່ວຍເຫຼືອບັນດາບ້ານ, ເມືອງ, ກົມກອງ, ໂຮງຮຽນ ແລະ ຜູ້ມີສິດເລືອກຕັ້ງ ລວມມູນຄ່າຫຼາຍກວ່າ 2,5 ຕື້ກີບ;

- **ປີ 2025:** ລົງພົບປະຜູ້ມີສິດເລືອກຕັ້ງໄດ້ 157 ຈຸດ, ໃນນີ້ ສຳນັກງານ, ອົງການ, ກົມກອງ 13 ຈຸດບ້ານ 144 ຈຸດ, ມີຜູ້ເຂົ້າຮ່ວມ ທັງໝົດ 21.959 ຄົນ, ຍິງ 11.043 ຄົນ; ພ້ອມນັ້ນ ໄດ້ມອບລົດຖີບ 55 ຄັນ ຄອມພິວເຕີ 5 ເຄື່ອງ, ອຸປະກອນການຮຽນ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ລວມມູນຄ່າ 181.500.000 ກີບ (ໜຶ່ງຮ້ອຍ ແປດສິບເອັດລ້ານ ຫ້າແສນກີບ).

**6. ການເຄື່ອນໄຫວວຽກງານການຕ່າງປະເທດ**

ໄດ້ຮ່ວມກັບ ສະພາແຫ່ງຊາດ, ຄະນະພັກ, ອົງການປົກຄອງແຂວງ ເຄື່ອນໄຫວຕ້ອນຮັບ, ຢ້ຽມຢາມ ແລກປ່ຽນບົດຮຽນ ກັບ ສສ ຫວຽດນາມ, ສປ ຈີນ, ສ ກຸຍບາ, ຣາຊະອານາຈັກໄທ, ສິງກະໂປ ລວມທັງໝົດ 22 ຄັ້ງ; ນອກນີ້ຍັງໄດ້ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງ ຊາດອາຊຽນ (AIPA) ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ ແລະ ນໍາເອົາແຜນແມ່ບົດວ່າດ້ວຍ ການສ້າງຄູ່ຮ່ວມຊະຕາກໍາ ລາວ-ຈີນ ສະບັບປີ 2024-2028 ມາຈັດຕັ້ງເຜີຍ, ເຊື່ອມຊຶມ ໃຫ້ພະນັກງານ-ລັດຖອນ ພາຍໃນສະພາປະຊາຊົນແຂວງ ຢ່າງທົ່ວເຖິງ; ພ້ອມນີ້ຍັງໄດ້ພົວພັນພິເສດກັບແຂວງເຊີນລາ ເພື່ອນໍາສົ່ງພະນັກງານ-ລັດຖະກອນ ຂອງສະພາປະຊາຊົນແຂວງ ໄປບໍາລຸງພາສາຫວຽດນາມ ຢູ່ແຂວງດັ່ງກ່າວ ຈໍານວນ 14 ທ່ານ, ຍິງ 3 ທ່ານ;

❖ **ປີ 2025**: ໄດ້ຕ້ອນຮັບ ທ່ານເອກອັກຄະລັກສະທູດ ສສ ຫວຽດນາມ ປະຈໍາລາວ ແລະ ເຂົ້າຮ່ວມກິດຈະກໍາສໍາຄັນທີ່ກົງສຸນ ສສ ຫວຽດນາມ ຈັດຂຶ້ນ.

**ມາດຕາ 2 ຮັບຮອງເອົາວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V**

ກອງປະຊຸມເຫັນດີ ຮັບຮອງເອົາວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ດັ່ງນີ້:

1. ສືບຕໍ່ປັບປຸງບັນດາເອກະສານກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ໃຫ້ສໍາເລັດ.

2. ຈັດຕັ້ງການລົງພົບປະຜູ້ມີສິດເລືອກຕັ້ງ ນໍາເອົາຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 10, ແນວທາງນະໂຍບາຍ, ກົດໝາຍ ລົງເຜີຍແຜ່ໃຫ້ປະຊາຊົນ ທັງເປັນການເກັບກໍາຄໍາຄິດເຫັນ ແລະ ອໍາລາໜ້າທີ່ ໃນການເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ IV.

3. ກະກຽມວຽກງານຮອບດ້ານ ເພື່ອຮັບໃຊ້ໃຫ້ແກ່ການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V.

4.ປັບປຸງຮ່າງແຜນການເຄື່ອນໄຫວວຽກງານ 5 ປີ(2026-2030), ປະຈໍາປີ 2026 ຕາມການປະກອບຄໍາເຫັນ ຂອງສະມາຊິກສະພາປະຊາຊົນແຂວງ.

5.ກະກຽມວຽກງານຮອບດ້ານໃຫ້ແກ່ການດໍາເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V ເປັນຕົ້ນ:

5.1) ບົດລາຍງານຂອງ ຄະນະກໍາມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V

5.2) ບົດສະເໜີການເລືອກຕັ້ງປະທານສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ກໍາມະການ ຄະນະປະຈໍາສະພາປະຊາຊົນແຂວງ

5.3) ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງ ປະທານຄະນະກໍາມະການ ແລະ ຫົວໜ້າຫ້ອງການສະພາປະຊາຊົນແຂວງ.

5.4) ພິຈາລະນາ, ຮອງເອົາເອົາໂຄງປະກອບກົງຈັກຂອງສະພາປະຊາຊົນແຂວງ

5.5) ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ຂອງອົງການປົກຄອງແຂວງ;

5.6) ພິຈາລະນາ, ຮອງເອົາເອົາແຜນການ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດກາລັດແຂວງ ແລະ ອົງການກວດສອບ ປະຈຳພາກເໜືອ 1.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າ, ພະແນກການ, ອົງການ, ກົມກອງ ທີ່ກ່ຽວຂ້ອງຂອງແຂວງ, ເມືອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ